ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-22 ກຸມພາ 2024
ປີທີ 13
ສະບັບທີ 958
ລາຍສັປປະດາ

## ປະທານ ກສຕສ ຕ້ອນຮັບປະທານຄະນະກຳມາທິການ ສະພາຜູ້ແທນລາຊະດອນລຸກຊຳບວກ



(ສພຊ) ວັນທີ 08 ກຸມພາ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ຕ້ອນຮັບທ່ານ Gusty Grass ປະທານຄະນະກຳມາທິການດ້ານການຕ່າງປະເທດ ແລະ ເອີຣົບ, ການຊ່ວຍເຫຼືອຕ່າງປະເທດ, ການຄ້າພາຍນອກ ແລະ ພາກພື້ນ ສະພາຜູ້ແທນລາຊະດອນລຸກຊຳບວກ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການພົບປະຄັ້ງນີ້ ເຊິ່ງຈະເປັນໂອກາດດີທີ່ຈະໄດ້ປຶກສາຫາລື ແລະ ຊຸກຍູ້ເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືລະຫວ່າງສອງປະເທດ ລາວ-ລຸກຊຳບວກ ກໍຄືສອງອົງການນິຕິບັນຍັດ ທີ່ມີມູນເຊື້ອດີງາມມາແຕ່ດົນນານ ນັບຕັ້ງແຕ່ ສປປ ລາວ ແລະ ລຸກຊຳບວກ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 25 ກັນຍາ 1997

ອ່ານຕໍ່ໜ້າ 2

## ຄະນະຜູ້ແທນສະພາແຫ່ງຊາດລາວ ສຳເລັດການເຂົ້າຮ່ວມ ສັງເກດການການເລືອກຕັ້ງປະທານາທິບໍດີອາແຊກໄບຊານ




(ສພຊ) ໃນລະຫວ່າງວັນທີ 07-08 ກຸມພາ 2024 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ສົນຍາ ປະເສີດ ກຳມະການຄະນະປະຈຳ, ປະທານກຳມາທິການການຕ່າງປະເທດ ແລະ ທ່ານ ສຸບັນ ສະວະບຸດ ກຳມະການຄະນະປະຈຳ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ພ້ອມດ້ວຍພະນັກງານກ່ຽວຂ້ອງ ໄດ້ເດີນທາງໄປເຂົ້າຮ່ວມສັງເກດການ ການເລືອກຕັ້ງປະທານາທິບໍດີ ແຫ່ງ ສາທາລະນະລັດ ອາແຊກໄບຊານ ຕາມການເຊື້ອເຊີນຂອງປະທານລັດຖະສະພາປະເທດດັ່ງກ່າວ ໃນນາມຄະນະຜູ້ແທນຈາກລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ເຊິ່ງມີຂຶ້ນໃນວາລະທີ່ສະພາແຫ່ງຊາດ ແຫ່ງ ສປປ ລາວ ເປັນປະທານໄອປາໃນປີ 2024.

ການເລືອກຕັ້ງປະທານາທິບໍດີ ແຫ່ງ ສ.ອາແຊກໄບຊານ ຈັດຂຶ້ນທຸກໆ 7 ປີ, ແຕ່ຄັ້ງນີ້ແມ່ນຈັດຂຶ້ນກ່ອນກຳນົດ 1 ປີ ເຊິ່ງມີຜູ້ລົງສະໝັກຮັບເລືອກຕັ້ງເປັນປະທານາທິບໍດີທັງໝົດ 7 ທ່ານ ໃນນີ້, ມີຜູ້ສະໝັກເອກະລາດ 2 ທ່ານ ແລະ ຜູ້ສະໝັກທີ່ເປັນຕົວແທນຈາກພັກການເມືອງ 5 ທ່ານ ປະກອບມີ: 1) ທ່ານອິລຮາມອາລິເຢັບ(Ilham Aliyev)

ອ່ານຕໍ່ໜ້າ 3

## ຮອງປະທານ ກຜງສ ພົບປະເຮັດວຽກ ກັບສະມາຊິກລັດຖະສະພາເຢຍລະມັນ



(ສພຊ) ໃນຕອນເຊົ້າຂອງວັນພະຫັດທີ 08 ກຸມພາ 2024 ທີ່ສະພາແຫ່ງຊາດ, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ), ສະພາແຫ່ງຊາດລາວ ພົບປະ ແລະ ເຮັດວຽກກັບທ່ານ Andreas Larem ສະມາຊິກລັດຖະສະພາ ແຫ່ງ ສາທາລະນະລັດ ສະຫະພັນເຢຍລະມັນ ໃນໂອກາດມາຢ້ຽມຢາມແລະເຮັດວຽກ ຢູ່ ສປປ ລາວ.

ທ່ານ ທັນຕາ ກອງຜາລີ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການພົບປະຄັ້ງນີ້ ເຊິ່ງຈະເປັນໂອກາດດີທີ່ຈະໄດ້ປຶກສາຫາລືແລະຊຸກຍູ້ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ມີມາແຕ່ດົນນານ ແລະການຮ່ວມມືທີ່ມີໝາກຜົນລະຫວ່າງ ສປປ ລາວ ກັບ ສສ ເຢຍລະມັນ ເວົ້າລວມ, ເວົ້າສະເພາະການພົວພັນຮ່ວມມືລະຫວ່າງລັດຖະສະພາຂອງສອງປະເທດ ໃຫ້ໄດ້ຮັບການພັດທະນາ ແລະຂະຫຍາຍຕົວຍິ່ງໆຂຶ້ນຢ່າງຕໍ່ເນື່ອງ; ສອງປະເທດໄດ້ມີການແລກປ່ຽນການຢ້ຽມຢາມລະຫວ່າງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆຢ່າງປົກກະຕິ, ປະຊາຊົນສອງປະເທດໄປມາຫາສູ່ກັນ, ມີການພົວພັນດ້ານການຄ້າ-ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ. ທ່ານຮອງປະທານ ກຜງສ ຍັງໄດ້ແຈ້ງສະພາບການໂດຍຫຍໍ້ກ່ຽວກັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ກັບລັດຖະສະພາເຢຍລະມັນ ເຊິ່ງສະແດງອອກໃນການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນນຳກັນຢ່າງປົກກະຕິເປັນຕົ້ນແມ່ນປີ 2022, ທ່ານ ສົນຍາ ປະເສີດ ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ຢ້ຽມຢາມ ແລະ

ອ່ານຕໍ່ໜ້າ 2

## ສຳເລັດການຍົກລະດັບຄວາມຮູ້ ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ



ອ່ານຕໍ່ໜ້າ 3

## ສຳເລັດການຍົກລະດັບຄວາມຮູ້ ການຄົ້ນຄວ້າ, ວິເຄາະ ແລະ ສົມທຽບມາດຕາຂອງກົດໝາຍ



(ສພຊ) ພາຍຫຼັງດຳເນີນມາເປັນເວລາ 5 ວັນ, ທີ່ເມືອງວັງວຽງ ແຂວງວຽງຈັນ; ກອງປະຊຸມເຝິກອົບຮົມຍົກລະດັບຄວາມຮູ້ວຽກງານການຄົ້ນຄວ້າ, ວິເຄາະ ແລະ ສົມທຽບບາງມາດຕາຂອງກົດໝາຍ ໄດ້ສຳເລັດໃນວັນທີ 9 ກຸມພາ 2024 ໂດຍການເປັນປະທານກ່າວປິດຂອງທ່ານ ບໍ ຫານປະເສີດ ຫົວໜ້າສູນຄົ້ນຄວ້າວິທະຍາສາດ ແລະນິຕິກຳ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ(ສນສ). ເຂົ້າຮ່ວມມີວິທະຍາກອນຊ່ຽວຊານວຽກງານລັດຖະສະພາປະຈຳອົງການສະຫະປະຊາຊາດເພື່ອການພັດທະນາ ພ້ອມດ້ວຍສຳມະນາກອນຈາກ ສນສ; ກົມກົດໝາຍ; ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ; ກົມຄຳຮ້ອງຂໍຄວາມເປັນທຳ ແລະ ກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ເຊິ່ງກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານສົມທົບຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ

ອ່ານຕໍ່ໜ້າ 3



ບັນຫາທີ່ພົ້ນເດັ່ນ... (ໜ້າ 4)



ກົນຫຼາຍຈົນຫ້ອງແຕກ.. (ໜ້າ 9)



ການາດາ ຕໍ່ເວລາ... (ໜ້າ 11)



ເອົານັກວິທະຍາສາດ... (ໜ້າ 12)



## ປະທານ...

(ຕໍ່ຈາກໜ້າ 1)

ໃຫ້ໄດ້ຮັບການພັດທະນາແລະຂະຫຍາຍຕົວຢ່າງຕໍ່ເນື່ອງ. ທ່ານປະທານ ກສຕສ ໄດ້ລາຍງານຫຍໍ້ສະພາບລວມກ່ຽວກັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວກັບສະພາຜູ້ແທນລາຊະດອນລຸກຊຳບວກ ໄດ້ຮັບການເສີມຂະຫຍາຍດີຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໄລຍະຜ່ານມາໄດ້ມີການແລກປ່ຽນຢ້ຽມຢາມຄະນະຜູ້ແທນລະດັບສູງຂອງສອງສະພາ, ລະດັບຂັ້ນກຳມາທິການ, ຄະນະເລຂາທິການ ແລະ ລະດັບວິຊາການ ລວມທັງມີການແລກປ່ຽນບົດຮຽນແລະຂໍ້ມູນຂ່າວສານ, ມີການສະໜັບສະໜູນເຊິ່ງກັນ ແລະກັນໃນເວທີພາກພື້ນ ແລະ ສາກົນຢ່າງປົກກະຕິ; ພ້ອມດຽວກັນນັ້ນ, ທ່ານປະທານ ກສຕສ ຖືໂອກາດນີ້ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນລຸກຊຳບວກ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ ສປປລາວ ເປັນຕົ້ນການຊ່ວຍເຫຼືອເພື່ອການພັດທະນາຊົນນະບົດ, ການພັດທະນາດ້ານສາທາລະນະສຸກ ແລະການສຶກສາ ເຊິ່ງເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປລາວ ໃຫ້ຂະຫຍາຍຕົວເປັນກ້າວໆ.

ທ່ານ Gusty Grass ໄດ້ສະແດງຄວາມຂອບໃຈຕໍ່ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະໃຫ້ຄຳໝັ້ນວ່າຈະສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດທີ່ມີມາແລ້ວນັ້ນ ໃຫ້ສືບຕໍ່ໄດ້ຮັບການເສີມຂະຫຍາຍ ແລະເປັນຮູບປະທຳຍິ່ງໆຂຶ້ນໄປ ລວມທັງຈະສືບຕໍ່ຊຸກຍູ້ ແລະ ສົ່ງເສີມໃຫ້ຂະແໜງການທີ່ກ່ຽວຂ້ອງ ຂອງລັດຖະບານສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆທີ່ໄດ້ລົງນາມຮ່ວມກັນ ໂດຍສະເພາະຂະແໜງການທີ່ສອງປະເທດມີທ່າແຮງ ເຊັ່ນ: ການພັດທະນາຊົນນະບົດ, ການສຶກສາ, ສາທາລະນະສຸກໃຫ້ໄດ້ຮັບປະສິດທິຜົນສູງເປັນກ້າວໆ.

## ຮອງປະທານ...

(ຕໍ່ຈາກໜ້າ 1)

ແລກປ່ຽນບົດຮຽນຢູ່ເຢຍລະມັນ ແລະ ທ່ານ Wulf Gallert ປະທານກຳມາທິການການຕ່າງປະເທດ ພັກຝ່າຍຊ້າຍເຢຍລະມັນ ຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ໃນເດືອນສິງຫາ 2023; ສອງຝ່າຍໄດ້ແລກປ່ຽນຂໍ້ມູນຂ່າວສານ, ສານຊົມເຊີຍ, ສານອວຍພອນໃນໂອກາດວັນສຳຄັນຕ່າງໆ ພ້ອມທັງສະໜັບສະໜູນເຊິ່ງກັນ ແລະກັນໃນເວທີພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນກອງປະຊຸມຄູ່ຮ່ວມເຈລະຈາລັດຖະສະພາອາຊີເອີຣົບ (ASEP), ສະຫະພັນລັດຖະສະພາສາກົນ (IPU) ແລະ ອື່ນໆ. ນອກຈາກນີ້, ສສ ເຢຍລະມັນ ກໍໃຫ້ການຊ່ວຍເຫຼືອສະໜັບສະໜູນໃຫ້ແກ່ສະພາແຫ່ງຊາດລາວ ໂດຍຜ່ານເຊກາ, ໂລຊາລຸກຊຳບວກແລະອົງການສາກົນຕ່າງໆ ເພື່ອເສີມສ້າງຄວາມເຂັ້ມແຂງໃນດ້ານຕ່າງໆ ເປັນຕົ້ນທາງດ້ານເຕັກນິກ-ວິຊາການ, ການສ້າງ ແລະ ປັບປຸງກົດໝາຍ, ທັດສະນະສຶກສາ, ກອງປະຊຸມສຳມະນາ ແລະ ອື່ນໆ ເຊິ່ງເປັນປະໂຫຍດຢ່າງຍິ່ງໃຫ້ແກ່ສະພາແຫ່ງຊາດລາວ.

ໃນໂອກາດດຽວກັນນີ້, ທ່ານຮອງປະທານກຳມາທິການແຜນການ, ການເງິນ ແລະການກວດສອບ ກໍໄດ້ແຈ້ງສະພາບລວມໂດຍຫຍໍ້ຂອງສະພາແຫ່ງຊາດລາວຊຸດທີ IX ພ້ອມທັງແຈ້ງໃຫ້ຊາບວ່າ ໃນປີນີ້ ສປປ ລາວ ເປັນປະທານອາຊຽນ ແລະ ເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ, ເປີດປີທ່ອງທ່ຽວປີ 2024 ແລະ ສະພາແຫ່ງຊາດລາວ ຈະໄດ້ເປັນເຈົ້າພາບກອງປະຊຸມສະມັດຊາລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ45 ຫຼື AIPA-45 ຢູ່ນະຄອນຫຼວງວຽງຈັນ ໃນເດືອນຕຸລາ 2024.

ທ່ານ Andreas Larem ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານກຳມາທິການແຜນການ, ການເງິນ ແລະການກວດສອບ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ; ພ້ອມນີ້, ກໍມີຄວາມສົນໃຈກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ ແລະການເຄື່ອນໄຫວຢູ່ໃນເວທີສະຫະພັນລັດຖະສະພາສາກົນ (IPU) ຂອງສະພາແຫ່ງຊາດລາວ. ໃນໂອກາດນີ້ ກໍຢືນຢັນຈະໃຫ້ການປະກອບສ່ວນສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ເຢຍລະມັນ-ລາວ ທີ່ມີມາແລ້ວນັ້ນ ໃຫ້ໄດ້ຮັບການເສີມຂະຫຍາຍ ແລະ ເປັນຮູບປະທຳຍິ່ງໆຂຶ້ນໄປ.



## ເລື່ອງເດັ່ນ ຂ່າວເດັດ

**# ຄັດໂດຍ: ທອນສະນິດ**

*❐ ປີ 2023 ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ນະຄອນຫຼວງວຽງຈັນ ສາມາດຍາດຜົນງານພົ້ນເດັ່ນຫຼາຍດ້ານໃນການປະຕິບັດວຽກງານວິຊາສະເພາະ ເຊິ່ງວຽກງານຂຶ້ນທະບຽນພາຫະນະສາມາດຂຶ້ນທະບຽນໃໝ່ໄດ້ 52.396 ຄັນ ໂອນຊື່ ປ່ຽນສິລົດ 60.578 ຄັນ ຍົກຍ້າຍອອກ 5.128 ຊຸດ ຍົກຍ້າຍເຂົ້າ 3.567 ຊຸດ ແລະ ພິມເຕັກນິກລົດ 104.878 ໃບ, ວຽກງານຄຸ້ມຄອງການຂັບຂີ່: ສອບເສັງການຂັບຂີ່ໄດ້ 12.038 ເທື່ອຄົນ ປ່ຽນໃບຂັບຂີ່ເກົ່າ ຕໍ່ອາຍຸ ແຈ້ງເສຍຫາຍ 27.541 ໃບ, ພິມໃບຂັບຂີ່ໄດ້ທັງໝົດ 39.579 ໃບຍົກຍ້າຍ ສຳນວນຕ່າງແຂວງເຂົ້າມາ 440 ຊຸດ ຍົກຍ້າຍສຳນວນໄປຕ່າງແຂວງ 198 ຊຸດ ລາຍຮັບວິຊາການໄດ້ທັງໝົດ 40,21 ຕື້ກີບ ທຽບໃສ່ແຜນການປີ 36 ຕື້ກີບ ປະຕິບັດໄດ້ເກີນແຜນ 4,21 ຕື້ກີບ ເທົ່າກັບ 112% ເງິນດັ່ງກ່າວໄດ້ມອບເຂົ້າຄັງເງິນແຫ່ງຊາດ.*

***ໜສພ. ວຽງຈັນໃໝ່ 05/02/2024***

*❐ ສະພາແຫ່ງຊາດ ໄດ້ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2024 ເຊິ່ງໃນນີ້ ກໍໄດ້ມີຄາດໝາຍແຜນເງິນຕາ ໂດຍສະເພາະດ້ານອັດຕາເງິນເຟີ້ໃຫ້ຫຼຸດລົງຢູ່ໃນລະດັບບໍ່ເກີນ9% ໃນທ້າຍປີນີ້, ໃນທ່າມກາງທີ່ທ່າອ່ຽງຂອງອັດຕາເງິນເຟີ້ໃນເດືອນທຳອິດຂອງປີນີ້ ຍັງສືບຕໍ່ເພີ່ມຂຶ້ນເລັກໜ້ອຍ ທີ່ລະດັບ 0,07% ຈາກເດືອນທັນວາປີ 2023 (24,37%) ເປັນ 24,44% ຂອງເດືອນມັງກອນ 2024. ຢ່າງໃດກໍຕາມ, ໃນມະຕິກອງປະຊຸມສະພາແຫ່ງຊາດເລກທີ 118/ສພຊ, ລົງວັນທີ 21/11/2023 ວ່າດ້ວຍການຮັບຮອງບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025), ທິດທາງແຜນພັດທະນາເສດຖະກິດ-ສັງຄົມທ້າຍສະໄໝ ຮອດປີ 2025, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ 2023 ແລະ ແຜນພັດທະນາເສດຖະກິດ-ສັງຄົມ ປີ 2024 ໄດ້ຮັບຮອງຄາດໝາຍແຜນເງິນຕາໄວ້ຫຼາຍຄາດໝາຍ ເຊິ່ງພາຍໃນປີນີ້ໄດ້ວາງໄວ້ວ່າ ຈະຄວບຄຸມປະລິມານເງິນ M2 ຂະຫຍາຍຕົວບໍ່ເກີນ 25%; ອັດຕາເງິນເຟີ້ໃຫ້ຫຼຸດລົງ ຢູ່ໃນລະດັບບໍ່ເກີນ 9% ໃນທ້າຍປີ 2024; ອັດຕາແລກປ່ຽນໃຫ້ໝັ້ນຄົງ ໃນລະດັບບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້.*

***ໜສພ. ປະຊາຊົນ 07/02/2024***

*❐ ງານວາງສະແດງສິນຄ້າ ໃນມະຫະກຳບຸນຊ້າງ ປະຈຳປີ 2024 ໄດ້ເປີດຂຶ້ນໃນວັນທີ 12 ກຸມພາຜ່ານມາ, ທີ່ເດີ່ນສະໜາມຫຼວງຂອງແຂວງໄຊຍະບູລີ ໂດຍມີຮ້ານວາງສະແດງສິນຄ້າຈາກ 11 ເມືອງ ເຊິ່ງປະເພດສິນຄ້າທີ່ນຳເຂົ້າມາວາງສະແດງ ແລະ ຈຳໜ່າຍໃນງານປະກອບມີ: ສິນຄ້າຫັດຖະກຳຈາກບັນດາເມືອງ, ສິນຄ້າປະເພດເຄື່ອງນຸ່ງຫົ່ມ, ສິນຄ້າອຸປະໂພກ-ບໍລິໂພກ, ສິນຄ້າປະເພດເຄື່ອງດື່ມ, ກົນຈັກ ແລະ ລົດ, ເຄື່ອງຫຼິ້ນສຳລັບເດັກ ລວມມີຮ້ານວາງສະແດງ 310 ຮ້ານ ມີມູນຄ່າສິນຄ້າ 20 ຕື້ກວ່າກີບ.*

***ໜສພ ປະເທດລາວ 14/02/2024***

*❐ ຄາດໝາຍແຫຼ່ງທຶນເພື່ອພັດທະນາຂອງ ສປປ ລາວ ໃນປີນີ້ ທີ່ໄດ້ຮັບການຮັບຮອງໂດຍກອງປະຊຸມສະພາແຫ່ງຊາດ ແມ່ນມີຄວາມຕ້ອງການທຶນ 56.784 ຕື້ກີບ, ເທົ່າກັບ 19,32% ຂອງລວມຍອດຜະລິດຕະພັນພາຍໃນ (GDP) ເຊິ່ງໃນນີ້ ຄາດໝາຍການລົງທຶນຈາກພາກເອກະຊົນພາຍໃນ ແລະ ຕ່າງປະເທດສູງ ເປັນອັນດັບໜຶ່ງ, ຮອງລົງມາຄືທຶນຊ່ວຍເຫຼືອທາງການເພື່ອພັດທະນາ (ODA) ແລະ ຕາມມາດ້ວຍທຶນໃນແຜນລົງທຶນຂອງລັດ, ສ່ວນການລົງທຶນຈາກ ແຫຼ່ງທຶນອື່ນໆ ມີຄາດໝາຍທີ່ໜ້ອຍສຸດໃນຄາດໝາຍດັ່ງກ່າວ.*

***ໜສພ. ປະຊາຊົນ 14/02/2024***



## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ປະທານາທິບໍດີຄົນປັດຈຸບັນ ຈາກພັກອາແຊກໄບຊານໃໝ່; 2) ທ່ານ ຊາຮິດ ໂອຣຸກ(Zahid Oruc) ຜູ້ສະໝັກເອກະລາດ; 3) ທ່ານ ຟາຊິລ ມູສຕາຟາ (Fazil Mustafa) ຈາກພັກກຣິດອໍເດີປາຕີ(Great Order Party); 4) ທ່ານ ແອລຊາດ ມູຊາເຢັບ (Elsad Musayev) ຈາກພັກອາແຊກໄບຊານຍິ່ງໃຫຍ່; 5) ທ່ານ ຄູດຣາດ ຮາຊານກູລິເຢັບ (Qudrat Hasanquliyev) ຈາກພັກແນວໂຮມປະຊາຊົນອາແຊກໄບຊານ; 6) ທ່ານ ຣາຊີ ນູຣູລາເຢັບ (Razi Nurullayev) ຈາກພັກແນວໂຮມແຫ່ງຊາດ ແລະ 7) ທ່ານ ຟູອາດ ອາລີເຢັບ (Fuad Aliyev) ຜູ້ສະໝັກເອກະລາດ.

ຄະນະກຳມະການເລືອກຕັ້ງລະດັບຊາດ ໄດ້ກຳນົດເຂດເລືອກຕັ້ງອອກເປັນ 125 ເຂດໃນທົ່ວປະເທດ, ມີ 6.319 ໜ່ວຍເລືອກຕັ້ງ (ບໍ່ລວມໜ່ວຍເຄື່ອນທີ່) ເຊິ່ງຜູ້ມີສິດເລືອກຕັ້ງທີ່ມີອາຍຸຄົບ 18 ປີບໍລິບູນຂຶ້ນໄປ ຈຳນວນ 6,4 ລ້ານຄົນ, ການເລືອກຕັ້ງໄດ້ເປີດຂຶ້ນພ້ອມກັນໃນທົ່ວປະເທດນັບແຕ່ເວລາ 8 ໂມງເຊົ້າ ແລະ ປິດຫີບລົງໃນເວລາ 7 ໂມງແລງຂອງວັນທີ 7 ກຸມພາ 2024; ການເລືອກຕັ້ງກ່ອນກຳນົດຄັ້ງນີ້ ມີຜູ້ໄປໃຊ້ສິດຫຼາຍກວ່າ 67% ຂອງຜູ້ມີສິດປ່ອນບັດທັງໝົດໃນທົ່ວປະເທດ, ໂດຍແມ່ນທ່ານ ອິລຮາມ ອາລີເຢັບ ຜູ້ສະໝັກຮັບເລືອກຕັ້ງຈາກພັກອາແຊກໄບຊານໃໝ່ ໄດ້ຮັບໄຊຊະນະຢ່າງຖ້ວມທົ້ນ ສູງເຖິງ 92% ເຮັດໃຫ້ທ່ານສືບຕໍ່ເປັນປະທານາທິບໍດີ ແຫ່ງ ສາທາລະນະລັດ ອາແຊກໄບຊານ ໄປອີກ 7 ປີ.

ຕໍ່ກັບການເລືອກຕັ້ງປະທານາທິບໍດີອາແຊກໄບຊານກ່ອນກຳນົດຄັ້ງນີ້, ເຈົ້າພາບໄດ້ເຊື້ອເຊີນຜູ້ສັງເກດການພາຍໃນ, ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນ ແລະ ປະເທດຕ່າງໆເປັນຈຳນວນຫຼວງຫຼາຍ ເພື່ອເຂົ້າຮ່ວມສັງເກດການ; ຄະນະຜູ້ແທນສະພາແຫ່ງຊາດລາວ ກໍໄດ້ຮ່ວມກັບສະມາຊິກໄອປາແລະຄະນະຜູ້ສັງເກດການປະເທດອື່ນໆທີ່ໄປຕິດຕາມ ແລະ ສັງເກດການຢູ່ໜ່ວຍເລືອກຕັ້ງຕ່າງໆຈຳນວນ 6 ແຫ່ງ ທີ່ນະຄອນຫຼວງບາກູ, ເຫັນວ່າຄະນະກຳມະການເລືອກຕັ້ງຂັ້ນສູນກາງ ແລະ ຄະນະກຳມະການເລືອກຕັ້ງຂັ້ນຕ່າງໆ ໄດ້ມີການກະກຽມເຈົ້າໜ້າທີ່, ໜ່ວຍປ່ອນບັດ, ຫີບບັດ, ບັນຊີລາຍຊື່ຜູ້ສະໝັກ, ບັນຊີລາຍຊື່ຜູ້ມີສິດປ່ອນບັດ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆ ແລະ ຄວາມປອດໄພຮອບດ້ານ ໃຫ້ແກ່ການມາໃຊ້ສິດປ່ອນບັດເລືອກຕັ້ງຂອງປະຊາຊົນ ໂດຍກຳນົດເອົາໂຮງຮຽນແລະສະຖາບັນການສຶກສາຕ່າງໆໃນຂອບເຂດທົ່ວປະເທດ ເປັນໜ່ວຍປ່ອນບັດ ພ້ອມທັງປະກາດມື້ເລືອກຕັ້ງ ເປັນວັນພັກລັດຖະການອີກດ້ວຍ ເພື່ອອຳນວຍຄວາມສະດວກໃຫ້ແກ່ປະຊາຊົນໄດ້ໄປໃຊ້ສິດຂອງຕົນຢ່າງເຕັມສ່ວນ.

ໃນການເຂົ້າຮ່ວມສັງເກດການຄັ້ງນີ້, ທ່ານ ສັນຍາ ປຣະເສີດ ຫົວໜ້າຄະນະຜູ້ແທນຈາກສະພາແຫ່ງຊາດລາວ ກໍໄດ້ຖືກເຊີນໃຫ້ຖະແຫຼງຂ່າວ ແລະ ໃຫ້ສຳພາດຕໍ່ສື່ມວນຊົນຂອງອາແຊກໄບຊານຫຼາຍຄັ້ງ ໂດຍທ່ານໄດ້ຕີລາຄາ ແລະ ສະແດງຄວາມຊົມເຊີຍຕໍ່ການເລືອກຕັ້ງຄັ້ງນີ້ວ່າ "ປະຊາຊົນມີຄວາມຕື່ນຕົວມາໃຊ້ສິດປ່ອນບັດເລືອກຕັ້ງຢ່າງຫຼວງຫຼາຍ, ດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ, ຕາມຂະບວນການປະຊາທິປະໄຕ, ເປີດເຜີຍ, ໂປ່ງໃສ, ຍຸຕິທຳ ແລະ ເປັນໄປຕາມກົດໝາຍວ່າດ້ວຍການເລືອກຕັ້ງຂອງສາທາລະນະລັດ ແຫ່ງ ອາແຊກໄບຊານ". ພ້ອມດຽວກັນນີ້, ຄະນະຜູ້ແທນສະພາແຫ່ງຊາດລາວຍັງໄດ້ຖືໂອກາດພົບປະເຮັດວຽກແບບບໍ່ເປັນທາງການກັບຄະນະຮັບຜິດຊອບຜູ້ສັງເກດການຈາກສະພາແຫ່ງຊາດອາແຊກໄບຊານ ເພື່ອປຶກສາຫາລືກ່ຽວກັບການຮ່ວມມືສອງຝ່າຍລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດລາວ-ອາແຊກໄບຊານ ໂດຍສະເພາະແມ່ນການສະໜັບສະໜູນການເປັນປະທານໄອປາຂອງ ສປປ ລາວ ໃນປີນີ້.

## ສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ) ພາຍຫຼັງດຳເນີນມາເປັນເວລາ 3 ວັນ, ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ; ກອງປະຊຸມເຝິກອົບຮົມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ແກ່ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ໄດ້ສຳເລັດໃນວັນທີ 9 ກຸມພາ 2024 ໂດຍການເປັນປະທານກ່າວປິດຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ ເຊິ່ງມີຄະນະກົມ ແລະ ພະນັກງານຂອງກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ແລະ ບັນດາກົມພາຍໃນສະພາແຫ່ງຊາດ ເຂົ້າຮ່ວມ; ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານສົມທົບຈາກມູນນິທິເວດມິນສະເຕີ ເພື່ອປະຊາທິປະໄຕ (Westminster Foundation for Democracy).

ທ່ານ ອຳໄພ ຈິດມານົນ ໄດ້ມີຄຳເຫັນວ່າ: ກອງປະຊຸມເຕັມໄປດ້ວຍເນື້ອໃນສຳຄັນ, ເລິກເຊິ່ງຫຼາຍດ້ານ; ການຄົ້ນຄວ້າ, ປະກອບຄຳເຫັນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາຂອງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ເຫັນວ່າມີເຫດມີຜົນ, ພາວະວິໄສ ແລະ ແທດກັບສະພາບການຕົວຈິງໃນການຂະຫຍາຍຕົວຂອງສະພາບເສດຖະກິດ-ສັງຄົມໃນປັດຈຸບັນ ເຊິ່ງສັງລວມແລ້ວເຫັນວ່າບັນດາທ່ານເຫັນໄດ້ເຖິງຄວາມສຳຄັນຂອງວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ; ເຖິງແມ່ນວ່າຍັງເປັນວຽກງານໃໝ່ສຳລັບພວກເຮົາກໍຕາມ, ແຕ່ພວກເຮົາຕ້ອງໄດ້ພ້ອມກັນຕັ້ງໜ້າຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ ເພື່ອຮັບປະກັນໃຫ້ບັນດາຂະແໜງການຕ່າງໆ ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ມີຄວາມເຂັ້ມງວດສັກສິດ. ຜ່ານການຮັບຟັງການລາຍງານ, ເຜີຍແຜ່ ແລະ ຖອດຖອນບົດຮຽນຮ່ວມກັນກັບບັນດາທ່ານກ່ຽວກັບວຽກງານດັ່ງກ່າວ ເຫັນວ່າມີຫຼາຍດ້ານທີ່ມີຜົນສຳເລັດພົ້ນເດັ່ນ ແລະ ມີບາງດ້ານທີ່ຍັງພົບຄວາມຫຍຸ້ງຍາກເປັນຕົ້ນຄວາມເຂົ້າໃຈຕໍ່ກັບບັນດາອົງການທີ່ເປັນໃຈກາງ, ເປັນເຈົ້າການໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຕົວຈິງ, ໄລຍະເວລາໃນການປະເມີນ, ກົນໄກການຕິດຕາມກວດກາພາຍຫຼັງກອງປະຊຸມສະພາແຫ່ງຊາດພິຈາລະນາຮັບຮອງແລ້ວ, ງົບປະມານສະໜອງໃຫ້ແກ່ວຽກງານດັ່ງກ່າວ ເຊິ່ງຂ້າພະເຈົ້າຂໍມີຄຳເຫັນຕື່ມບາງບັນຫາຄື: ສະເໜີໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ໃນນາມເປັນພະນັກງານທີ່ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ກໍຄືກຳມາທິການຕົນ ສືບຕໍ່ເຜີຍແຜ່, ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍ ທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໃຫ້ເລິກເຊິ່ງກວ້າງຂວາງຕື່ມ; ເອົາໃຈໃສ່ຄົ້ນຄວ້າອີງໃສ່ປຶ້ມຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຕົວຈິງ ແລະ ພະຍາຍາມຖອດຖອນບົດຮຽນຈາກການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃຫ້ລະອຽດຈະແຈ້ງ ເພື່ອປັບປຸງແກ້ໄຂວິທີ, ຂັ້ນຕອນ, ຮູບການໃນການຈັດຕັ້ງປະຕິບັດວຽກງານໃຫ້ດີຂຶ້ນເທື່ອລະກ້າວ ແນໃສ່ຫັນພະນັກງານ-ລັດຖະກອນໃຫ້ມີຄວາມຊຳນານ, ເປັນມືອາຊີບໃນຕໍ່ໜ້າ; ສືບຕໍ່ປະສານສົມທົບກັບທຸກກຳມາທິການພາຍໃນສະພາແຫ່ງຊາດ ເພື່ອກຳນົດແຜນຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນແຕ່ລະປີ ໃຫ້ມີຄວາມວ່ອງໄວ, ຊັດເຈນ ແລະ ທັນກຳນົດເວລາ; ເອົາໃຈໃສ່ປະສານສົມທົບກັບບັນດາກະຊວງ-ອົງການທີ່ກ່ຽວຂ້ອງເພື່ອຕິດຕາມກວດກາບັນດາກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງກຳມາທິການຕົນ ຍັງມີມາດຕາໃດຂອງກົດໝາຍໃດ ທີ່ຍັງບໍ່ທັນໄດ້ຈັດຕັ້ງຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ.

**(ນາງ ຕາດຳ ທ່ານຟ້າ)**



## ສຳເລັດການ...

(ຕໍ່ຈາກໜ້າ 1)

ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

ບັນດາຜູ້ເຂົ້າຮ່ວມໄດ້ຮຽນຮູ້ກ່ຽວກັບ 6 ຫົວຂໍ້ຄື: ຄວາມຮູ້ພື້ນຖານຂອງການຄົ້ນຄວ້າລັດຖະສະພາ; ການສົ່ງເສີມການບໍລິຫານຜົນງານການຄົ້ນຄວ້າຂອງສະຖາບັນ; ການໄດ້ມາຂອງຂໍ້ມູນ, ການວິເຄາະນະໂຍບາຍ ແລະ ກົດໝາຍ; ການວິເຄາະ ແລະ ການສົມທຽບບາງມາດຕາຂອງຮ່າງກົດໝາຍ; ທັກສະການຂຽນທີ່ມີປະສິດທິພາບ; ການກວດສອບຄຸນນະພາບຂອງບົດ. ການເຝິກອົບຮົມ ໄດ້ຈັດແບ່ງກັນເປັນກຸ່ມໃນການຄົ້ນຄວ້າ, ວິເຄາະ, ສົນທະນາແລກປ່ຽນບົດຮຽນ ແລະ ປະສົບການ, ແກ້ຂໍ້ຂ້ອງໃຈ, ແລະ ຂຶ້ນສະເໜີບົດທີ່ກຸ່ມໄດ້ຄົ້ນຄວ້າໃນແຕ່ລະຫົວຂໍ້ທີ່ໄດ້ຍົກຂຶ້ນມາ; ພ້ອມນັ້ນ, ຍັງໄດ້ມີພິທີມອບ-ຮັບໃບຢັ້ງຢືນຕື່ມອີກ.



ໃນຕອນທ້າຍ, ທ່ານ ບໍຫານ ປະເສີດ ໄດ້ມີຄຳເຫັນກ່າວປິດກອງປະຊຸມວ່າ: ການເຝິກອົບຮົມໃນຄັ້ງນີ້ສະແດງໃຫ້ເຫັນເຖິງຄວາມເປັນເອກະພາບ ແລະ ຄວາມຮັບຜິດຊອບສູງຂອງບັນດາທ່ານທີ່ໄດ້ມີຄວາມເອົາໃຈໃສ່ຮັບຟັງ, ສົນທະນາ, ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນ, ເຝິກປະຕິບັດຕົວຈິງ ແລະ ມີການທົດສອບຄວາມຮັບຮູ້ທີ່ໄດ້ເຝິກອົບຮົມ; ວິທະຍາກອນ ກໍໄດ້ນຳສະເໜີບົດຮຽນທີ່ດີຈາກການປະຕິບັດຕົວຈິງຢູ່ໃນລັດຖະສະພາຫຼາຍປະເທດ ເຊັ່ນ: ລັດຖະສະພາເວວ, ອົດສະຕຣາລີ, ຟິຈິ,... ເຮັດໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮັບຮູ້ແລະເຂົ້າໃຈຫຼັກການ, ວິທີການ ແລະຮູບແບບການດຳເນີນການຄົ້ນຄວ້າລັດຖະສະພາ ແລະ ການວິເຄາະກົດໝາຍ ໄດ້ຢ່າງເລິກເຊິ່ງຂຶ້ນຕື່ມ. ເພື່ອສືບຕໍ່ຜັນຂະຫຍາຍຜົນສຳເລັດກອງປະຊຸມ, ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມການເຝິກອົບຮົມ ຈົ່ງນຳເອົາບົດຮຽນທີ່ໄດ້ຮຽນຮູ້ໃນເທື່ອນີ້ ໄປໝູນໃຊ້ເຂົ້າໃນພາກປະຕິບັດຕົວຈິງໃຫ້ປາກົດຜົນເປັນຈິງ.

**(ນາງ ສຸພາວັນ ທອມສະນິດ)**

# ກຳມາທິການການຕ່າງປະເທດ ເອົາໃຈໃສ່ກະກຽມການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45

(ສພຊ) ໃນໄລຍະດຳເນີນດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ສົນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ໃຫ້ສຳພາດກັບໜັງສືພິມ "ຜູ້ແທນປະຊາຊົນ" ກ່ຽວກັບວຽກງານຕິດຕາມກວດກາຂອງກຳມາທິການການຕ່າງປະເທດ ໂດຍທ່ານໄດ້ກ່າວວ່າ: ກຳມາທິການການຕ່າງປະເທດ ໄດ້ເອົາໃຈໃສ່ໃນການຕິດຕາມກວດກາການເຄື່ອນໄຫວຂອງອົງການອຳນາດແຫ່ງລັດຂັ້ນຕ່າງໆ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ບັນດາມະຕິຕ່າງໆຂອງສະພາແຫ່ງຊາດ ຜ່ານຮູບການ ແລະ ລະບອບກົນໄກຂອງຕົນ ການຕິດຕາມກວດກາໃນຂົງເຂດວຽກງານການຕ່າງປະເທດ ແລະ ການຮ່ວມມືສາກົນຂອງກຳມາທິການການຕ່າງປະເທດຕະຫຼອດກາງສະໄໝທີ່ຜ່ານມາ, ກຳມາທິການການຕ່າງປະເທດ ໄດ້ຕິດຕາມກວດກາຢູ່ບັນດາແຂວງພາກເໜືອ, ພາກກາງ ແລະ ພາກໃຕ້; ພ້ອມກັນນັ້ນ, ໄດ້ເຂົ້າຮ່ວມຕິດຕາມຄະນະປະຈຳສະພາແຫ່ງຊາດລົງເຄື່ອນໄຫວຕິດຕາມກວດກາຢູ່ບັນດາແຂວງຕ່າງໆ. ພິເສດໃນປີນີ້, ຄະນະນຳກຳມາທິການການຕ່າງປະເທດ ແລະ ກຳມາທິການກ່ຽວຂ້ອງຂອງສະພາແຫ່ງຊາດລາວໄດ້ເຄື່ອນໄຫວຕິດຕາມກວດກາຮ່ວມກັບສະພາແຫ່ງຊາດ ສສ.ຫວຽດນາມ ກ່ຽວກັບຈັດຕັ້ງປະຕິບັດສັນຍາ ແລະ ອານຸສັນຍາ ທີ່ລັດຖະບານສອງປະເທດ ໄດ້ລົງນາມຮ່ວມກັນ ໂດຍສະເພາະແມ່ນອະນຸສັນຍາວ່າດ້ວຍການຮ່ວມມື ແລະ ລົງທຶນພັດທະນາທ່າທຽບເຮືອ 1, 2 ແລະ 3 ທ່າເຮືອສາກົນລາວ-ຫວຽດ (ຫວຸ້ງອ່າງ) ຢູ່ແຂວງຮາຕິງ ສສ.ຫວຽດນາມ. ພ້ອມນີ້, ຍັງເປັນຄັ້ງທຳອິດໃນການຕິດຕາມກວດກາຮ່ວມລະຫວ່າງສະພາແຫ່ງຊາດລາວ ກັບສະພາແຫ່ງຊາດຫວຽດນາມ, ລະຫວ່າງສາມສະພາແຫ່ງຊາດ ກຳປູເຈຍ, ລາວ, ຫວຽດນາມ (CLV) ໃນລະຫວ່າງວັນທີ 17-21 ຕຸລາ 2023 ຜ່ານມານີ້ ເພື່ອເກັບກຳ ແລະ ສັງລວມບັນດາເນື້ອໃນຕ່າງໆເຂົ້າປຶກສາຫາລືກັນຢູ່ໃນກອງປະຊຸມສຸດຍອດ CLV ຄັ້ງທຳອິດ ທີ່ສະພາແຫ່ງຊາດລາວ ໄດ້ຮັບກຽດເປັນເຈົ້າພາບໃນທ້າຍປີ2023; ນອກຈາກນີ້, ກຳມາທິການການຕ່າງປະເທດ ຍັງເອົາໃຈໃສ່ຕິດຕາມກວດກາຢ່າງເປັນປົກກະຕິ ໂດຍຜ່ານບົດສະຫຼຸບລາຍງານຂອງຂະແໜງການກ່ຽວຂ້ອງຂອງລັດຖະບານ.



ເພື່ອປັບປຸງບັນຫາທີ່ຍັງຄົງຄ້າງດ້ານການເຄື່ອນໄຫວວຽກງານການຕ່າງປະເທດແລະເພື່ອເຮັດໃຫ້ວຽກງານການລົງພົບປະຊາຊົນ ແລະ ວຽກງານການຕິດຕາມກວດກາໃນຂົງເຂດການຕ່າງປະເທດຂອງສະພາແຫ່ງຊາດ ສາມາດຮັບໃຊ້ໄດ້ຢ່າງມີປະສິດທິພາບແນວທາງຂອງພັກ ແລະ ນະໂຍບາຍຂອງລັດ, ສາມາດດຶງດູດເອົາການຮ່ວມມື ແລະ ການສະໜັບສະໜູນຈາກສາກົນ, ສະພາແຫ່ງຊາດ ກໍຄືກຳມາທິການການຕ່າງປະເທດ ຈຶ່ງໄດ້ມີມາດຕະການວິທີການ ກໍຄືເປົ້າໝາຍສູ້ຊົນເຊັ່ນ:

1. ການຈັດຕັ້ງປະຕິບັດ 3 ພາລະບົດບາດ ຂອງອົງການນິຕິບັນຍັດ ແລະ ການເຄື່ອນໄຫວວຽກງານການຕ່າງປະເທດໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຫຼັກການ, ລະບອບແບບແຜນວິທີເຮັດວຽກ ແລະ ແນວທາງນະໂຍບາຍການຕ່າງປະເທດຂອງພັກ;

2. ຊຸກຍູ້ໃຫ້ລັດຖະບານເອົາໃຈໃສ່ໃນການແກ້ໄຂບັນຫາທີ່ກຳມາທິການການຕ່າງປະເທດໄດ້ສະເໜີໄປແລ້ວນັ້ນ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງທີ່ຢູ່ສູນກາງ ແລະ ທ້ອງຖິ່ນ ໃນການດຳເນີນການແກ້ໄຂໃຫ້ສຳເລັດຜົນ ພ້ອມທັງລາຍງານຄືນຕໍ່ຄະນະປະຈຳສະພາແຫ່ງຊາດ;

3. ເອົາໃຈໃສ່ໃນການພົວພັນປະສານງານກັບບັນດາສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການການຕ່າງປະເທດ ທີ່ປະຈຳຢູ່ແຕ່ລະທ້ອງຖິ່ນ ໃນການລົງເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳບັນຫາທີ່ພົ້ນເດັ່ນໃນຂົງເຂດວຽກງານການຕ່າງປະເທດ, ພ້ອມທັງລາຍງານໃຫ້ຄະນະນຳກຳມາທິການການຕ່າງປະເທດເປັນແຕ່ລະໄລຍະ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;

4. ເພີ່ມທະວີການປະສານສົມທົບກັບອົງການບໍລິຫານ ເພື່ອຕິດຕາມກວດກາການເຄື່ອນໄຫວວຽກງານການຕ່າງປະເທດ, ການຮ່ວມມືກັບສາກົນ, ການຈັດຕັ້ງປະຕິບັດສົນທິສັນຍາ, ອານຸສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆທີ່ລັດຖະບານເຊັນກັບຕ່າງປະເທດ;

5. ການເຂົ້າເຖິງເນື້ອໃນຄວາມສາມາດໃນການຮັບຮູ້ ແລະ ເຂົ້າໃຈຕໍ່ກັບເນື້ອໃນຂອງຜົນສຳເລັດ ທີ່ກອງປະຊຸມສະພາແຫ່ງຊາດໄດ້ພິຈາລະນາ ແລະ ຮັບຮອງ ຂອງພໍ່ແມ່ປະຊາຊົນແມ່ນຍັງບໍ່ທັນສູງ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກ, ຈຶ່ງຈຳເປັນຕ້ອງຄັດຈ້ອນເອົາເນື້ອໃນທີ່ສຳຄັນ ພ້ອມທັງອະທິບາຍເນື້ອໃນໃຫ້ສາມາດເຂົ້າໃຈງ່າຍທີ່ສຸດ;

6. ຍົກສູງການພົວພັນປະສານງານກັບສະພາປະຊາຊົນແຂວງ ໂດຍສະເພາະຄະນະຮັບຜິດຊອບໃຫ້ປະສານສົມທົບກັບອຳນາດການປົກຄອງຂັ້ນທ້ອງຖິ່ນ ໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນການຮຽກໂຮມພໍ່ແມ່ປະຊາຊົນ ເຂົ້າຮ່ວມໃນພິທີເຜີຍແຜ່ຜົນສຳເລັດ ເຊິ່ງໃນແຕ່ລະຈຸດມີພໍ່ແມ່ປະຊາຊົນເຂົ້າຮ່ວມຢ່າງຕັ້ງໜ້າ ດ້ວຍຄວາມຮັບຜິດຊອບສູງ.

ທ່ານຍັງໄດ້ກ່າວຕື່ມອີກວ່າ: ເພື່ອຍົກສູງພາລະບົບບາດຂອງກຳມາທິການການຕ່າງປະເທດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນຕໍ່ໜ້າ, ກຳມາທິການການຕ່າງປະເທດ ຈະໄດ້ສຸມໃສ່ບາງໜ້າວຽກເປັນຕົ້ນ: ສືບຕໍ່ສ້າງແຜນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດການຕ່າງປະເທດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມາທິການການຕ່າງປະເທດເປັນຕົ້ນ ການຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາສາກົນ ແລະ ບັນດາຂໍ້ຕົກລົງຕ່າງໆ ທີ່ ສປປລາວ ເປັນພາຄີ, ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງສຳນັກງານຜູ້ຕາງໜ້າ ແຫ່ງ ສປປລາວ ແລະ ການກະກຽມການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນ ສປປລາວ ໃນປີ 2024.

ນອກຈາກນັ້ນ, ຍັງໄດ້ຄົ້ນຄວ້າກະກຽມຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດມາ ຢ້ຽມຢາມ ສປປ ລາວ, ການຕ້ອນຮັບທູດຕານຸທູດ, ອົງການຈັດຕັ້ງສາກົນ ແລະ ແຂກຕ່າງປະເທດ ເຂົ້າຢ້ຽມຂໍ່ານັບການນຳ, ອຳລາ, ພົບປະເຮັດວຽກ, ຄົ້ນຄວ້າການເຂົ້າຮ່ວມກອງປະຊຸມສາກົນອື່ນໆ ທີ່ສະພາແຫ່ງຊາດລາວ ເປັນສະມາຊິກ ແລະ ບໍ່ເປັນສະມາຊິກຕາມການສະເໜີ, ຄົ້ນຄ້ວາໃຫ້ປະກອບຄຳເຫັນໃສ່ເອກະສານຕ່າງໆ, ການເສຍເງິນພັນທະປະຈຳປີ ແລະ ສະໜອງຂໍ້ມູນໃຫ້ແກ່ອົງການລັດຖະສະພາພາກພື້ນ ແລະ ສາກົນ ທີ່ສະພາແຫ່ງຊາດລາວ ເປັນສະມາຊິກຕາມການສະເໜີ.



## ຮອງປະທານ...

(ຕໍ່ຈາກໜ້າ 1)

ລ້ານໂດລາສະຫະລັດ(ຈັດຢູ່ອັນດັບ10ການລົງທຶນຂອງຕ່າງປະເທດຢູ່ ສປປລາວ); ໃນໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ກໍໄດ້ສະແດງຄວາມເຊື່ອໝັ້ນວ່າທ່ານຫົວໜ້າອົງການໄອຍະການສູງສຸດສິງກະໂປ ຈະຊ່ວຍຊຸກຍູ້ບັນດານັກທຸລະກິດຂອງສິງກະໂປເຂົ້າມາລົງທຶນຢູ່ສປປລາວ, ຊຸກຍູ້ບັນດານັກທ່ອງທ່ຽວສິງກະໂປ ມາທ່ອງທ່ຽວຢູ່ລາວ ໃຫ້ຫຼາຍຂຶ້ນຕື່ມ ເພາະປີ 2024 ເປັນປີທ່ອງທ່ຽວຂອງລາວ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ຕີລາຄາສູງຜົນການພົບປະເຮັດວຽກຂອງສອງອົງການໄອຍະການສອງປະເທດທີ່ນັບມື້ນັບຂະຫຍາຍຕົວ, ສອງອົງການ ກໍໄດ້ມີບົດບັນທຶກຄວາມເຂົ້າໃຈທີ່ໄດ້ລົງນາມຮ່ວມກັນໃນວັນທີ 11 ມິຖຸນາ 2019 ມີການແລກປ່ຽນຄວາມຮູ້ດ້ານວິຊາການ ໂດຍການຈັດເຝິກອົບຮົມ ແລະ ພັດທະນາທັກສະໃຫ້ແກ່ພະນັກງານ, ຈັດສຳມະນາ, ກອງປະຊຸມແລກປ່ຽນຂໍ້ມູນຂ່າວສານກ່ຽວກັບກົດໝາຍ, ບົດຮຽນ ແລະ ປະສົບການໃນການຕ້ານອາດຊະຍາກຳທາງໄຟເບີ ແລະ ການສ້າງບຸກຄະລາກອນໃນຕໍ່ໜ້າ ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງ ສປປລາວ ກັບ ສ.ສິງກະໂປ ກໍຄືລະຫວ່າງສອງອົງການນິຕິບັນຍັດໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຍິ່ງໆຂຶ້ນ.

ທ່ານຮອງປະທານສະພາແຫ່ງຊາດຍັງແຈ້ງໃຫ້ຊາບຕື່ມອີກວ່າ: ສະພາແຫ່ງຊາດລາວ ແລະ ລັດຖະສະພາສິງກະໂປ ມີການພົວພັນຮ່ວມມືອັນດີທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ, ໄດ້ມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນແລະສາກົນ; ໃນປີ 2024 ສປປລາວ ຈະເປັນປະທານອາຊຽນ ແລະ ສະພາແຫ່ງຊາດ ກໍຈະເປັນປະທານອົງການສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ, ຫວັງເປັນຢ່າງຍິ່ງວ່າຈະໄດ້ຮັບການຮ່ວມມື ແລະ ສະໜັບສະໜູນຈາກລັດຖະບານ ແລະ ລັດຖະສະພາສິງກະໂປ.

ຈາກນັ້ນ, ທ່ານ ລູເຊິນວອງ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ພ້ອມທັງແຈ້ງໃຫ້ຊາບໃນການເຄື່ອນໄຫວຢ້ຽມຢາມແລະເຮັດວຽກຢູ່ ສປປລາວ ໃນເທື່ອນີ້ ແລະ ໃຫ້ຄຳໝັ້ນໝາຍວ່າຈະສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ, ອົງການໄອຍະການສູງສຸດ ສ.ສິງກະໂປ ກັບອົງການໄອຍະການປະຊາຊົນສູງສຸດ ສປປລາວ ສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງ ສ.ສິງກະໂປກັບສປປລາວ ກໍຄືລະຫວ່າງສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຍິ່ງໆຂຶ້ນ.

**(ຂ່າວ: ນາງ ໄຊໂສພາພອນ ມິ່ງມຸງຄຸນ,
ພາບ: ສອນສັກ ວັນວິໄຊ)**

## ກຜຽສ...

(ຕໍ່ຈາກໜ້າ 1)

ການພິຈາລະນາຮັບຮອງ ແລະ ການຕິດຕາມກວດກາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ການຈັດສັນງົບປະມານໂຄງການລົງທຶນຂອງລັດ, ການແກ້ໄຂຄຳຮ້ອງ ແລະ ຄຳສະເໜີຂອງປະຊາຊົນ, ການສ້າງ ແລະ ປັບປຸງກົດໝາຍ ໃນຂົງເຂດຄວາມຮັບຜິດຊອບ ແລະ ການຮ່ວມມືໃນຕໍ່ໜ້າ.

ນອກຈາກນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ລົງເຄື່ອນໄຫວຢ້ຽມຢາມພື້ນຖານເສດຖະກິດຂອງແຂວງເຫງະອານ ແລະ ຮ່າຕິງ ເປັນຕົ້ນເຂດພັດທະນາອຸດສາຫະກຳWHA, ເຂດພັດທະນາອຸດສາຫະກຳຫວຽດນາມ-ສິງກະໂປ (VSIP), ໂຮງງານຫຼອມເຫຼັກ FORMOSA, ໂຮງງານຜະລິດໝໍ້ໄຟລົດໄຟຟ້າ, ທ່າເຮືອສາກົນ ລາວ-ຫວຽດ ວຸງອ່າງ ລວມທັງຢ້ຽມຊົມສະຖານທີ່ສຳຄັນ ແລະ ຮ່ອງຮອຍປະຫວັດສາດການປະຕິວັດຂອງສອງແຂວງດັ່ງກ່າວ.

## ປະເມີນພະນັກງານນຳພາ-ຄຸ້ມຄອງ ສພຂ ຊຽງຂວາງ




(ສພຊ) ໃນວັນທີ 10 ມັງກອນ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມປະເມີນພະນັກງານນຳພາ-ຄຸ້ມຄອງ ປະຈຳປີ 2023, ໂດຍການເປັນປະທານ ຂອງທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ (ສພຂ), ເຂົ້າຮ່ວມມີທ່ານ ຄຳໄຊ ບຸນເພັດ ຮອງຫົວໜ້າຄະນະຈັດແຂວງ, ມີຄະນະປະຈຳ ສພຂ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ. ຈຸດປະສົງໃນການດຳເນີນກອງປະຊຸມໃນຄັ້ງນີ້ ເພື່ອປະເມີນພະນັກງານນຳພາ-ຄຸ້ມຄອງເຂົ້າໃນກົງຈັກການຈັດຕັ້ງຂອງ ສພຂ ກ່ອນການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງໃໝ່ ເພື່ອເລືອກເຟັ້ນເອົາຜູ້ທີ່ມີຄວາມຮູ້, ຄວາມສາມາດຄົບຖ້ວນຕາມມາດຖານເງື່ອນໄຂ.

ກອງປະຊຸມໄດ້ຮັບຟັງມະຕິວ່າດ້ວຍມາດຖານຂອງພະນັກງານນຳພາຄຸ້ມຄອງສະບັບເລກທີ030ຂອງກົມການເມືອງສູນກາງພັກ, ລົງວັນທີ 3 ມັງກອນ 2018, ມະຕິວ່າດ້ວຍວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ສະບັບເລກທີ032ຂອງກົມການເມືອງສູນກາງພັກ ລົງວັນທີ 3 ມັງກອນ 2018 ແລະ ຄຳແນະນຳສະບັບເລກທີ 292/ຄຈສພ ລົງວັນທີ 26ເມສາ2018ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ, ວຽກງານຄຸ້ມຄອງພະນັກງານ ແລະ ວຽກງານສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ພ້ອມທັງແນະນຳການປະເມີນ. ໂອກາດດັ່ງກ່າວ ທ່ານ ວຽງໄຊ ສີວິໄລ ໄດ້ມີຄຳເຫັນໂອ້ລົມຕໍ່ພະນັກງານພາຍໃນ ສພຂ ວ່າ: ຈົ່ງສືບຕໍ່ປະຕິບັດໜ້າທີ່ວຽກງານຂອງ ສພຂ ໃຫ້ມີຜົນສຳເລັດດີຂຶ້ນ, ຮັກສາຄວາມສາມັກຄີພາຍໃນໃຫ້ດີຂຶ້ນກວ່າເກົ່າ ແລະ ການໃຫ້ຄະແນນໃນການປະເມີນບໍ່ໃຫ້ມີແນວຄິດອັກຄະຕິຕໍ່ຜູ້ຖືກປະເມີນ, ການປະເມີນຕ້ອງມີຄວາມໂປ່ງໃສສາມາດກວດສອບໄດ້.

**(ນາງ ສຸກສະຫວັນ ອິນທະແສງ)**

## ທວນຄືນວັນສ້າງຕັ້ງອົງການໄອຍະການປະຊາຊົນຄົບຮອບ 34 ປີ



(ສພຊ) ພິທີປາຖະກະຖາວັນສ້າງຕັ້ງ ອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ຄົບຮອບ 34 (9 ມັງກອນ 1990-9 ມັງກອນ 2024) ໄດ້ຈັດຂຶ້ນໃນວັນທີ 9 ມັງກອນ 2024ທີ່ອົງການໄອຍະການປະຊາຊົນແຂວງຄຳມ່ວນໂດຍການເປັນປະທານຂອງທ່ານ ບຸນມີ ພົມມະສອນ ປະທານ ສະພາປະຊາຊົນແຂວງ (ສພຂ), ທັງເປັນຜູ້ຊີ້ນຳວຽກງານຕຸລາການ, ເຂົ້າຮ່ວມມີທ່ານ ຄຳແດງ ສີບຸນເຮືອງ ຫົວໜ້າອົງການໄອຍະການປະຊາຊົນແຂວງພ້ອມດ້ວຍຄະນະ, ມີຕາງໜ້າພະແນກການ, ຂະແໜງການທີ່ກ່ຽວຂ້ອງຕະຫຼອດຮອດພະນັກງານວິຊາການອ້ອມຂ້າງອົງການໄອຍະການແຂວງລວມທັງໝົດ 90 ກວ່າທ່ານ.

ທ່ານ ຄຳແດງ ສີບຸນເຮືອງ ຫົວໜ້າອົງການໄອຍະການແຂວງ ໄດ້ຍົກໃຫ້ເຫັນຄວາມໝາຍ, ຄວາມສຳຄັນ ແລະ ປະຫວັດຄວາມເປັນມາຂອງວັນສ້າງຕັ້ງອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 9 ມັງກອນ 1990. ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປານາເປັນສາທາລະນະລັດ ປະຊາທິປະໄຕປະຊາຊົນລາວໃນວັນທີ 2 ທັນວາ 1975 ອັນໄດ້ໄຂສັງກາດໃໝ່ ສັງກາດທີ່ປະເທດຊາດມີເອກະລາດ ແລະ ປະຊາຊົນລາວມີອິດສະຫຼະພາບຢ່າງແທ້ຈິງ. ພັກເຮົາໂດຍມີປະທານ ໄກສອນ ພົມວິຫານ ເປັນຜູ້ນຳໜ້າໄດ້ນຳພາປະຊາຊົນລາວບັນດາເຜົ່າປະຕິບັດ 2 ໜ້າທີ່ຍຸດທະສາດຄື: “ປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ” ຕາມເສັ້ນທາງສັງຄົມນິຍົມ; ດຳເນີນພາລະກິດປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ ເຊິ່ງເລີ່ມຈາກການປ່ຽນແປງທາງດ້ານເສດຖະກິດ, ຫັນຈາກການຄຸ້ມຄອງລວມສູນບໍລິຫານເກືອກູນ ໄປສູ່ການຄຸ້ມຄອງຕາມກົນໄກຕະຫຼາດທີ່ມີການໄລ່ລຽງທາງດ້ານເສດຖະກິດ ແລະ ມີການດັດສົມຂອງລັດ ໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການແຫ່ງການປ່ຽນແປງໃໝ່ດັ່ງກ່າວ ຈຶ່ງມີຄວາມຈຳເປັນຕ້ອງຫັນໄປສູ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍ ເພື່ອເຮັດໃຫ້ລັດກາຍເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ. ໃນນັ້ນພັກໄດ້ຖືເອົາວຽກງານຕຸລາການເປັນວຽກງານ ໜຶ່ງທີ່ສຳຄັນ ແລະ ທັງເປັນເຄື່ອງມືຈຳເປັນຂອງພັກເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ປົກປັກຮັກສາຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າຮັບປະກັນເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ. ຈາກນັ້ນ, ຍັງໄດ້ຍົກໃຫ້ເຫັນເຖິງຜົນງານການເຄື່ອນໄຫວໃນໄລຍະເວລາ 34 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ເຊິ່ງມັນໄດ້ສະແດງອອກຄື: ໄລຍະທີ 1 ແຕ່ປີ 1975-1983, ໄລຍະທີ 2 ແຕ່ປີ 1983-1990 , ໄລຍະທີ 3 ແຕ່ປີ 1990-2009 ແລະ ໄລຍະແຕ່ປີ 2009-ປັດຈຸບັນ.

**(ນັກຂ່າວ ສພຂ)**

## ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13 ສຳເລັດກອງປະຊຸມ ປະຈຳປີ 2023

(ສພຊ) ໃນວັນທີ 8 ມັງກອນ 2024 ຄະນະ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມປະຈຳປີ 2023 ທີ່ຫ້ອງປະຊຸມພະແນກແຜນການ ແລະ ການລົງທຶນແຂວງ ໂດຍພາຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານຄະນະ ສສຊ, ເຂົ້າຮ່ວມມີ ທ່ານ ບຸນໂຈມ ອຸບົນປະເສີດ ເຈົ້າແຂວງສະຫວັນນະເຂດ, ມີບັນດາການນຳຂອງສະພາແຫ່ງຊາດ, ການນຳຂອງແຂວງ, ບັນດາຫົວໜ້າພະແນກການ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ ລວມທັງໝົດ 89 ທ່ານ, ຍິງ 28 ທ່ານ.




ຈຸດປະສົງກໍເພື່ອສະຫຼຸບການເຄື່ອນໄຫວວຽກງານຂອງ ສສຊ ກໍຄືການຊຸກຍູ້ການຈັດຕັ້ງປະຕິບັດວຽກງານທີ່ສຳຄັນພາຍໃນເຂດເລືອກຕັ້ງຂອງຕົນ. ໃນກອງປະຊຸມ ທ່ານ ຄຳຜັນ ຄູນສະຫວັນ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ໄດ້ຜ່ານບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງຄະນະສສຊປະຈຳເຂດເລືອກຕັ້ງທີ 13 ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ2024;ກອງປະຊຸມຍັງໄດ້ຮັບຟັງບົດລາຍງານກ່ຽວກັບການຈັດສັນ ແລະ ການຄຸ້ມຄອງ 3 ປະເພດປ່າ ພາຍໃນແຂວງ; ບົດລາຍງານການຄຸ້ມຄອງ ແລະສົ່ງເສີມການລົງທຶນພາຍໃນແຂວງ; ບົດລາຍງານການຄຸ້ມຄອງອັດຕາແລກປ່ຽນເງິນຕາພາຍໃນແຂວງ.

ຈາກນັ້ນ, ບັນດາ ສສຊ ກໍໄດ້ຊັກຖາມເຈາະຈີ້ມ ຕໍ່ພາກສ່ວນທີ່ໄດ້ລາຍງານ ເປັນຕົ້ນການຄຸ້ມຄອງປ່າສະຫງວນແຫ່ງຊາດ, ການຮັບອະນຸຍາດໃນການລົງທຶນທີ່ມີຜົນກະທົບຕໍ່ພື້ນທີ່ປ່າສະຫງວນ, ຜົນງານການເຄື່ອນໄຫວຂອງ ສສຊ ສະເໜີເພີ່ມໃສ່ບົດລາຍງານຕື່ມ, ໃຫ້ເຂັ້ມງວດໃນການຄຸ້ມຄອງອັດຕາການແລກປ່ຽນເງິນຕາ ຢູ່ບັນດາທະນະຄານທຸລະກິດ ພາຍໃນແຂວງ ແລະ ຈາກນັ້ນ ຕາງໜ້າຄະນະ ສສຊ, ພະແນກການທີ່ກ່ຽວຂ້ອງ, ຫົວໜ້າສາຂາທະນະຄານ ແຫ່ງ ສປປ ລາວ ພາກກາງ ກໍໄດ້ຂຶ້ນຊີ້ແຈງ, ໃຫ້ຄວາມຈະຈາງແຈ້ງຕໍ່ກອງປະຊຸມ.

ໃນກອງປະຊຸມຄັ້ງນີ້, ບັນດາ ສສຊ ໄດ້ຮັບຮອງມະຕິກອງປະຊຸມຈຳນວນ 4 ສະບັບຄື: ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024, ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບການຈັດສັນ ແລະ ການຄຸ້ມຄອງ3ປະເພດປ່າພາຍໃນແຂວງ, ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຄຸ້ມຄອງ ແລະ ສົ່ງເສີມການລົງທຶນພາຍໃນແຂວງ ແລະ ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຄຸ້ມຄອງອັດຕາແລກປ່ຽນເງິນຕາ ພາຍໃນແຂວງ.

**(ສະຫວັດດີ ສີບຸນເຮືອງ)**






# ສປນວ ສຳມະນາຮ່າງນິຕິກຳ 2 ສະບັບ ຂອງນະຄອນຫຼວງວຽງຈັນ



(ສພຊ) ວັນທີ 9 ມັງກອນ 2024 ທີ່ສຳນັກງານອົງການປົກຄອງນະຄອນຫຼວງວຽງຈັນ, ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ດຳເນີນກອງປະຊຸມສຳມະນາຮ່າງນິຕິກຳ ຈຳນວນ 2 ສະບັບ ທີ່ໄດ້ຮັບຮອງເອົາດ້ານຫຼັກການໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຜ່ານມາ, ໂດຍການເປັນປະທານກອງປະຊຸມຂອງ ທ່ານ ນາງ ລຳພອຍ ສີອັ້ກຄະຈັນ, ຮອງປະທານ ສປນວ, ເຂົ້າຮ່ວມມີບັນດາສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ, ຄະນະຮັບຜິດຊອບຮ່າງນິຕິກຳ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມຄັ້ງນີ້, ໄດ້ຮັບຟັງການລາຍງານຈາກຄະນະຮັບຜິດຊອບບັນດາຮ່າງນິຕິກຳ 2 ສະບັບ ຄື: ຮ່າງຂໍ້ຕົກລົງ ວ່າດ້ວຍກອງທຶນພັດທະນາກິລາ-ກາຍຍະກຳ ນະຄອນຫຼວງວຽງຈັນ ແລະ ຮ່າງຂໍ້ຕົກລົງ ວ່າດ້ວຍການກຳນົດລາຄາຫົວໜ່ວຍທົດແທນຄ່າເສຍຫາຍຂອງໂຄງການກໍ່ສ້າງປ້ອງກັນຕາຝັ່ງ ແລະ ພັດທະນາຄານແຄມຂອງ ໄລຍະທີ II. ພາຍຫຼັງທີ່ໄດ້ຖືກຮັບຮອງທາງດ້ານຫຼັກການ ໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສປນວ, ຄະນະຮັບຜິດຊອບໄດ້ສືບຕໍ່ປັບປຸງເນື້ອໃນຂອງແຕ່ລະມາດຕາ ແລະ ມາດຕະການຕ່າງໆ ຕາມການປະກອບຄຳເຫັນຂອງ ສສຊ ເພື່ອນຳມາລາຍງານຕໍ່ກອງປະຊຸມສຳມະນາຄັ້ງນີ້, ເຊິ່ງຕໍ່ກັບ 2 ຮ່າງຂໍ້ຕົກລົງດັ່ງກ່າວ ເຫັນວ່າຍັງມີບາງຈຸດທີ່ຕ້ອງໄດ້ສືບຕໍ່ປັບປຸງ ເປັນຕົ້ນ: ມາດຕາ ທີ່ຕິດພັນກັບຂອບເຂດການນຳໃຊ້, ດ້ານໂຄງປະກອບ ແລະປັບປຸງຮຽບຮຽງເນື້ອໃນຄຳສັບຄືນ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລ້ວນຳມາລາຍງານຄືນ ຕໍ່ກອງປະຊຸມ ສປນວ ເພື່ອຈະໄດ້ຮັບຮອງເອົາບັນດາຮ່າງຂໍ້ຕົກລົງດັ່ງກ່າວ.

# ຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມ ຂອງ ສພຂ ຜົ້ງສາລີ

(ສພຊ)ສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດກອງປະຊຸມຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມຄົບຄະນະປະຈຳປີ2023 ຂອງຄະນະກຳມະການ, ຄະນະເລຂາທິການ; ກອງປະຊຸມຄົບຄະນະປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ແລະ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II, ໂດຍການເປັນປະທານຂອງ ທ່ານ ທອງສີ ເສົາສຸລິພົມ ປະທານຄະນະປະຈຳ ສພຂ, ມີບັນດາທ່ານຄະນະປະຈຳ ສພຂ, ບັນດາທ່ານຮອງປະທານຄະນະກຳມະການ, ຮອງເລຂາທິການ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ; ກອງປະຊຸມດັ່ງກ່າວໄດ້ຈັດຂຶ້ນໃນວັນທີ 11 ມັງກອນ 2024, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ.



ກອງປະຊຸມ, ໄດ້ຮັບຟັງທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການ ສພຂ ຜ່ານຮ່າງບົດສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນການກະກຽມແລະດຳເນີນກອງປະຊຸມຄົບຄະນະປະຈຳປີ 2023 ຂອງຄະນະກຳມະການ, ຄະນະເລຂາທິການ; ກອງປະຊຸມຄົບຄະນະປະຈຳປີ2023 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແລະ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ເຊິ່ງຍົກໃຫ້ເຫັນດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງແລະບົດຮຽນທີ່ຖອດຖອນໄດ້. ຈາກນັ້ນ, ປະທານກອງປະຊຸມກໍໄດ້ມີຄຳເຫັນເຈາະຈີ້ມ ແລະ ບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ປະກອບຄຳຄິດຄຳເຫັນຕໍ່ຮ່າງບົດສະຫຼຸບດັ່ງກ່າວຢ່າງກົງໄປກົງມາ, ມີການແລກປ່ຽນບົດຮຽນ ແລະ ມີຂໍ້ສະເໜີຈຳນວນໜຶ່ງ ເພື່ອເປັນບ່ອນອີງໃນການປັບປຸງແກ້ໄຂ, ເພື່ອເປັນບົດຮຽນ ແລະ ສ້າງຄວາມເຂັ້ມແຂງ ແນໃສ່ເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມ ໃນຄັ້ງຕໍ່ໄປ ມີປະສິດຕິພາບ ແລະ ປະສິດຕິຜົນສູງ

**(ສູນທອງ)**

# ສສຊ ເຂດ 8 ສຳເລັດກອງປະຊຸມປະຈຳປີ 2023




(ສພຊ) ວັນທີ 5 ມັງກອນ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ເປີດກອງປະຊຸມປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 8 ແຂວງຫົວພັນ ໂດຍການເປັນປະທານ ຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 8, ທັງເປັນປະທານ ສະພາປະຊາຊົນແຂວງ (ສພຂ); ມີທ່ານ ຄຳແພງ ໄຊສົມແພງ ເຈົ້າແຂວງໆຫົວພັນ; ມີຄະນະ ສສຊ, ຄະນະປະຈຳ ສພຂ, ຄະນະປະຈຳພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າ, ແນວລາວສ້າງຊາດແຂວງ ແລະ ອົງການຈັດຕັ້ງມະຫາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປີ 2024 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດລາຍງານ ຢ່າງມີຈຸດສຸມຕໍ່ກັບວຽກງານບາງດ້ານທີ່ຍັງບໍ່ສາມາດບັນລຸຕາມແຜນການທີ່ວາງໄວ້, ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍຍັງບໍ່ສາມາດເຮັດໄດ້ດີເທົ່າທີ່ຄວນເປັນຕົ້ນແມ່ນການຕິດຕາມກວດກາ, ຂອດການປະສານງານລະຫວ່າງຄະນະສສຊ ກັບອົງການປົກຄອງແຂວງ, ການລົງພົບປະຜູ້ມີສິດເລືອກຕັ້ງ ບໍ່ທັນທົ່ວເຖິງ ໂດຍສະເພາະແມ່ນເຂດຊົນນະບົດຫ່າງໄກສອກຫຼີກ ແລະ ຍັງມີຫຼາຍບ້ານ ຍັງບໍ່ໄປຮອດໄປເຖິງ ເນື່ອງຈາກວ່າ ມີຫຼາຍປັດໄຈ. ພ້ອມດຽວກັນນີ້ ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ພ້ອມກັນພິຈາລະນາ ແລະ ຮັບຮອງເອົາການເຄື່ອນໄຫວວຽກງານປະຈຳປີ 2023 ແລະທິດທາງແຜນການປີ2024 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນກ່າວສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຄະນະ ສສຊ ປະຈຳເຂດເລືອກຕັ້ງທີ່ສາມາດຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນໃນໄລຍະຜ່ານມາ ເຫັນວ່າມີຫຼາຍດ້ານພົ້ນເດັ່ນ ແຕ່ກໍຍັງມີບາງດ້ານທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ດີເທົ່າທີ່ຄວນ ສະນັ້ນ, ຮຽກຮ້ອງໃຫ້ ສສຊ ປະຈຳເຂດເລືອກຕັ້ງ ຈົ່ງພ້ອມກັນເອົາໃຈໃສ່ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ໃຫ້ນັບມື້ນັບດີຂຶ້ນເປັນກ້າວໆ.

**(ນັກຂ່າວ ສພຂ)**

# ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຂ ຫຼວງນ້ຳທາ




(ສພຊ) ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ຊຸດທີ II ໄດ້ສຳເລັດລົງດ້ວຍຜົນສຳເລັດຕາມລະດັບຄາດໝາຍ ໃນວັນທີ 12 ມັງກອນ 2024 ຜ່ານມາ, ທີ່ສະໂມສອນແຂວງພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານ ສພຂ, ເຂົ້າຮ່ວມມີທ່ານ ອ່ອນຈັນ ຄຳພາວົງ ຮອງເຈົ້າແຂວງໆຫຼວງນ້ຳທາ ມີສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3, ສະມາຊິກສະພາປະຊາຊົນແຂວງ (ສສຂ), ມີອະດີດການນຳຂອງແຂວງ, ບັນດາອະດີດ ສສຊ, ສສຂ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ແຂກຖືກເຊີນລວມທັງໝົດ 150 ກວ່າທ່ານ.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຂ ຊຸດທີ II ນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ຍົກສູງຄວາມຮັບຜິດຊອບສຸມໃສ່ປະກອບຄຳຄິດເຫັນ, ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຕ່າງໆ ຂອງແຂວງ ແລະ ໄດ້ຮັບຮອງເອົາຮ່າງມະຕິກອງປະຊຸມຈຳນວນ 6 ສະບັບຄື: ຮ່າງມະຕິກອງປະຊຸມວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງແຂວງ; ຮ່າງມະຕິກອງປະຊຸມວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງແຂວງ; ຮ່າງມະຕິກອງປະຊຸມວ່າດ້ວຍ ການຮັບຮອງເອົາບົດລາຍງານ ຂອງອົງການກວດກາລັດແຂວງ ແລະ ອົງການກວດສອບແຫ່ງລັດປະຈຳພາກເໜືອ; ຮ່າງມະຕິກອງປະຊຸມວ່າດ້ວຍ ການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງແລະສານປະຊາຊົນແຂວງ; ຮ່າງມະຕິກອງປະຊຸມວ່າດ້ວຍ ການຮັບຮອງເອົາ ບົດສະຫຼຸບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງ; ຮ່າງມະຕິກອງປະຊຸມວ່າດ້ວຍ ການຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍ ການຄຸ້ມຄອງການຈັດງານ ແລະງານບຸນປະເພນີຕ່າງໆ ຢູ່ບັນດາເມືອງ ແລະ ໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ຂອງແຂວງຫຼວງນ້ຳທາ.

**(ນາງ ວັນນີ ແຜງບົວວັນ)**

# ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຢູ່ແຂວງໄຊຍະບູລີ

ທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນສະພາແຫ່ງຊາດ ກ່ຽວກັບບັນຫາທີ່ພົ້ນເດັ່ນແລະເຄັ່ງຮ້ອນຂອງແຂວງ ໂອກາດທີ່ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ:

**I. ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງ:**

ຜ່ານການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ການລົງຕິດຕາມກວດກາ ບັນຫາທີ່ເຄັ່ງຮ້ອນ ແລະ ປະຊາຊົນບັນດາເຜົ່າສະເໜີຫຼາຍກວ່າໝູ່ແມ່ນ:

1. ບັນຫາເງິນກີບອ່ອນຄ່າ, ລາຄາສິນຄ້າອຸປະໂພກ-ບໍລິໂພກໄດ້ເພີ່ມຂຶ້ນສູງ, ເຊິ່ງໄດ້ກະທົບຕໍ່ຊີວິດການເປັນຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າພາຍໃນແຂວງ, ເຊິ່ງໄລຍະຜ່ານມາທາງສູນກາງ ແລະ ທ້ອງຖິ່ນ (ລັດຖະບານ, ແຂວງ) ກໍໄດ້ມີຄວາມພະຍາຍາມສຸມໃສ່ແກ້ໄຂ ໂດຍຕິດພັນກັບ ການຈັດຕັ້ງປະຕິບັດວາລະແຫ່ງຊາດ, ແຕ່ຍັງບໍ່ທັນຕອບສະໜອງໃຫ້ກັບຄວາມຕ້ອງການ. ຍ້ອນ: (1) ການຜະລິດພາຍໃນເພື່ອທົດແທນການນຳເຂົ້າບໍ່ທັນແຂງແຮງ, (2) ສິນຄ້າເຄື່ອງອຸປະໂພກ-ບໍລິໂພກນັບທັງນ້ຳມັນເຊື້ອໄຟ ສ່ວນໃຫຍ່ ຍັງນຳເຂົ້າຈາກຕ່າງປະເທດເປັນຕົ້ນຕໍ, (3) ສະພາບການຄຸ້ມຄອງເງິນຕາຍັງບໍ່ທັນດີເທົ່າທີ່ຄວນ.

2. ບັນຫາການປູກມັນຕົ້ນເປັນສິນຄ້າຂອງປະຊາຊົນໄດ້ເປັນຂະບວນກວ້າງຂວາງພໍສົມຄວນ ເຊິ່ງໄດ້ກະທົບຕໍ່ສະພາບແວດລ້ອມ, ເຮັດໃຫ້ເນື້ອທີ່ປ່າໄມ້ຈຳນວນໜຶ່ງຖືກທຳລາຍ, ໃນປີ 2022 ມີເນື້ອທີ່ທັງໝົດ 58.874 ເຮັກຕາ, ແຕ່ປີ 2023 ມີເນື້ອທີ 80.630 ເຮັກຕາ, ເພີ່ມຂຶ້ນ 1,3 ເທົ່າຕົວ.

3. ບັນຫາການພັດທະນາພື້ນຖານໂຄງລ່າງພາຍໃນແຂວງ ເປັນຕົ້ນແມ່ນ ເສັ້ນທາງຫຼວງແຫ່ງຊາດ ລະຫວ່າງ ເມືອງໄຊຍະບູລີ ຫາ ເມືອງ ປາກລາຍ ແລະ ເມືອງໄຊຍະບູລີ ຫາ ເມືອງທົ່ງສາ ເຫັນວ່າມີການເປ່ເພຫຼາຍ ເຮັດໃຫ້ການສັນຈອນໄປ-ມາ, ການຂົນສົ່ງສິນຄ້າພົບຄວາມຫຍຸ້ງຍາກ ແລະ ຕ້ານເຈື່ອນນ້ຳເຫືອງຊາຍແດນລາວ-ໄທ ທີ່ເຫັນວ່າມີການເຊາະເຈື່ອນເຮັດໃຫ້ສູນເສຍເນື້ອທີ່ດິນຂອງປະເທດ.

● ວິທີການແກ້ໄຂໃນໄລຍະຜ່ານມາ ມີດັ່ງນີ້:

1. ອົງການປົກຄອງແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ໄດ້ໂຄສະນາເຜີຍແຜ່ສະພາບການຂອງໂລກ ແລະ ພາກພື້ນ, ການນຳເຂົ້ານ້ຳມັນເຊື້ອໄຟ, ວິກິດການທາງດ້ານເສດຖະກິດ-ການເງິນ, ສາເຫດພາໃຫ້ເງິນກີບອ່ອນຄ່າ, ລາຄາສິນຄ້າແພງ ແລະ ພ້ອມທັງ ຊຸກຍູ້ໃຫ້ປະຊາຊົນບັນດາເຜົ່າຜະລິດ, ຈຳກັດ ແລະ ຫຼຸດຜ່ອນການນຳເຂົ້າສິນຄ້າຈາກຕ່າງປະເທດ.

2. ໄດ້ຊຸກຍູ້ພະແນກການກ່ຽວຂ້ອງລົງເກັບກຳຂໍ້ມູນ ແລະ ມີມາດຕະການຕໍ່ຜູ້ລະເມີດ; ຈັດສັນດິນທຳການຜະລິດໃຫ້ປະຊາຊົນ ທຳການຜະລິດແບບຄົງທີ່ ບໍ່ຂະຫຍາຍເນື້ອທີ່, ໃຫ້ປະຊາຊົນປັບປຸງດິນໂດຍນຳໃຊ້ຝຸ່ນຊີວະພາບ ແລະ ອື່ນໆ ເພື່ອເພີ່ມຜົນຜະລິດ.

3. ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ສົມທົບກັບ ຄະນະປະຈຳສະພາປະຊາຊົນແຂວງລົງຕິດຕາມ, ກວດກາ ແລະ ຊຸກຍູ້ ຂະແໜງການກ່ຽວຂ້ອງປັບປຸງແກ້ໄຂບ່ອນທີ່ຈຳເປັນ ເປັນຕົ້ນສ້ອມແປງສຸກເສີນ ເພື່ອອຳນວຍຄວາມສະດວກໃນການສັນຈອນໄປ-ມາ.

4. ກ່ຽວກັບການປ້ອງກັນຕາຝັ່ງເຈື່ອນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ສົມທົບກັບ ຄະນະປະຈຳສະພາປະຊາຊົນແຂວງ ຊຸກຍູ້ອົງການປົກຄອງແຂວງ, ກະຊວງກ່ຽວຂ້ອງຈັດສັນງົບປະມານເຂົ້າໃນການກໍ່ສ້າງ ໃນແຕ່ລະປີຕາມຄວາມອາດສາມາດຂອງງົບປະມານ.

**II. ໄລຍະຜ່ານມາ ສະພາປະຊາຊົນແຂວງ ໄດ້ປະຕິບັດໃນການຕິດຕາມກວດກາ 2 ວາລະແຫ່ງຊາດ ໄດ້ຮັບຜົນດີ ແລະ ຂໍ້ຫຍຸ້ງຍາກດັ່ງນີ້:**

● ການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

ພາຍຫຼັງສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX, ສະພາປະຊາຊົນແຂວງ ໄດ້ສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະຄະນະປະຈຳພັກແຂວງຄົ້ນຄວ້າຜັນຂະຫຍາຍຄຳສັ່ງ ສະບັບເລກທີ 02/ກມສພ, ລົງວັນທີ 26 ກໍລະກົດ 2021; ມະຕິ 04/ສພຊ, ລົງວັນທີ 10 ສິງຫາ 2021 ຫັນມາເປັນນິຕິກຳຂອງແຂວງ ເຊິ່ງໄດ້ອອກຄຳແນະນຳ ສະບັບເລກທີ 443/ຄພຂ.ຊຍ, ລົງວັນທີ 12 ຕຸລາ 2021. ຫຼັງຈາກນັ້ນ, ໄດ້ຮັບຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 18 ກໍລະກົດ 2022 ຄະນະປະຈຳສະພາປະຊາຊົນແຂວງ ກໍໄດ້ຮີບຮ້ອນຄົ້ນຄວ້າແຕ່ງຕັ້ງຄະນະຮັບຜິດຊອບ ຕິດຕາມກວດກາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໂດຍໄດ້ອອກມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 67/ຄປຈ, ລົງວັນທີ 3 ຕຸລາ 2022 ຕິດພັນກັບແຈ້ງການ ສະບັບເລກທີ 184 ຂອງຄະນະເລຂາທິການສະພາແຫ່ງຊາດ ໄດ້ກຳນົດແຜນການກະກຽມ ແລະ ລົງເຄື່ອນໄຫວຕິດຕາມກວດກາ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ບັນດາພະແນກການ, ອົງການ, ກົມກອງ ແລະ ບັນດາເມືອງໄດ້ທັງໝົດ 7 ຈຸດ, ມີຜູ້ເຂົ້າຮ່ວມທັງໝົດ 395 ທ່ານ, ຍິງ 56 ທ່ານ.

ຜົນໄດ້ຮັບ: ໄດ້ສຸມໃສ່ເຄື່ອນໄຫວຢ່າງຕັ້ງໜ້າຕາມແຜນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ມາຮອດປະຈຸບັນສາມາດດຳເນີນການແກ້ໄຂບັນດາເປົ້າໝາຍລະອຽດ ຄື: ໄດ້ເຮັດບົດບັນທຶກສຶກສາອົບຮົມເປົ້າໝາຍເສບ ແລ້ວມອບໃຫ້ຄອບຄົວ ແລະ ບ້ານ ຄຸ້ມຄອງ ມີ 5.932 ຄົນ, ຍິງ 252 ຄົນ; ນຳເອົາເປົ້າໝາຍເສບມາບຳບັດປິ່ນປົວມີ 2.835 ຄົນ, ຍິງ 97 ຄົນ ແລະ ສຶກສາອົບຮົມປ່ອຍຕົວຜູ້ປິ່ນປົວບຳບັດຢາເສບຕິດ 2.326 ຄົນ, ຍິງ 86 ຄົນ, ດຳເນີນຄະດີຕໍ່ຜູ້ເສບທີ່ບໍ່ເຂັດຫຼາບ 142 ຄົນ, ຍິງ 3 ຄົນ; ມ້າງລາຍຄະດີຢາເສບຕິດ ໄດ້ 473 ລາຍ ມີຜູ້ກະທຳຜິດ 546 ຄົນ, ຍິງ 96 ຄົນ, ຍຶດຂອງກາງ: ຢາບ້າ ຈຳນວນ 10.841.947 ເມັດ, ຢາໄອ 565,5 ກິໂລກຼາມ, ຢາຝິ່ນ 1 ກິໂລກຼາມ; ວັດຖຸຂອງກາງອື່ນໆມີ: ເງິນກີບ 101.006.000 ກີບ, ເງິນບາດ 806.687 ບາດ, ລົດໃຫຍ່ 16 ຄັນ, ລົດຈັກ 55 ຄັນ, ໂທລະສັບມືຖື 225 ເຄື່ອງ;

ຂໍ້ຫຍຸ້ງຍາກ: (1) ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບຢາເສບຕິດແມ່ນມີຫຼາຍ, ແຕ່ການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນໄດ້ດີເທົ່າທີ່ຄວນ, (2) ວຽກວິຊາສະເພາະເກັບກຳຂ່າວ, ເປົ້າໝາຍ, ພື້ນທີ່ຍັງບໍ່ທັນແໜ້ນ, ບໍ່ລະອຽດຊັດເຈນ ເຮັດໃຫ້ວຽກງານແກ້ໄຂພົບຄວາມຫຍຸ້ງຍາກ, ຂາດຄວາມເປັນເອກະພາບບາງເມືອງປັບໃໝ, ບາງເມືອງສຶກສາອົບຮົມ ເຮັດໃຫ້ປະສິດທິພາບດ້ານການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານຮອບດ້ານ ໃນການແກ້ໄຂບັນຫາຢາເສບຕິດບໍ່ພົ້ນເດັ່ນ ແລະ ຂາດຕົວ. ພ້ອມດຽວກັນນີ້ການຕອບສະໜອງດ້ານງົບປະມານ, ວັດຖຸ, ອຸປະກອນ, ພາຫະນະ ທີ່ຈຳເປັນເພື່ອມາຮັບໃຊ້ແກ່ວາລະແຫ່ງຊາດຍັງບໍ່ທັນມີ; ຜ່ານການຈັດຕັ້ງປະຕິບັດຜ່ານມາເຫັນວ່າມີຫຼາຍຂັ້ນຕອນ, ມີຄວາມຊັກຊ້າເຮັດໃຫ້ແຜນການເຄື່ອນໄຫວບໍ່ສາມາດດຳເນີນໄປຕາມແຜນການທີ່ວາງໄວ້; (3) ການປັບປຸງຂີດຄວາມສາມາດໃນການເຄື່ອນໄຫວ, ຄວາມເປັນເຈົ້າການຂອງບາງຄະນະພັກ-ຄະນະນຳຂອງຂະແໜງການ ຍັງບໍ່ທັນມີຄວາມເປັນເຈົ້າການຍົກສູງຕໍ່ຄວາມຮັບຜິດຊອບຂອງຕົນໃນການຈັດຕັ້ງປະຕິບັດ, ເຖິງມີຄະນະປະສານງານແລ້ວແຕ່ບໍ່ທັນໄດ້ມີການເຄື່ອນໄຫວຢ່າງມີປະສິດທິຜົນ; ອີກດ້ານໜຶ່ງ ຄວາມເຂົ້າໃຈ, ຄວາມເປັນເຈົ້າການ ແລະ ການໃຫ້ຄວາມຮ່ວມມືຂອງປະຊາຊົນຈຳນວນໜຶ່ງ ຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດບໍ່ທັນສູງ, ໂດຍສະເພາະ ບາງຄອບຄົວຍັງມີການປົກປິດເຊື່ອງອຳເອົາລູກຫຼານຕົນທີ່ພົວພັນກັບການຄ້າ-ຂາຍ ແລະ ການເສບ;

● ການປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ:

ຜົນໄດ້ຮັບ: ໂດຍປະຕິບັດຕາມຄຳສັ່ງເລກທີ 01/ກມສພ, ລົງວັນທີ 26 ກໍລະກົດ 2021, ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ມະຕິ 07/ລບ, ລົງວັນທີ 4 ຕຸລາ 2021, ຄຳແນະນຳ ສະບັບເລກທີ 436/ຄພຂ.ຊຍ, ລົງວັນທີ 8 ຕຸລາ 2021 ແລະ ແຜນແບ່ງຄວາມຮັບຜິດຊອບ ໃຫ້ຂະແໜງການຈັດຕັ້ງປະຕິບັດ ສະບັບເລກທີ 191/ຈຂ.ຊຍ, ລົງວັນທີ 7 ທັນວາ 2021 ເຊິ່ງກຳນົດໄວ້ໃນທ້າຍປີ 2023 ຕ້ອງແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ ໃຫ້ສູ່ສະພາບປົກກະຕິໂດຍພື້ນຖານ, ແຂວງໄຊຍະບູລີ ໄດ້ກຳນົດທິດທາງແຜນການ ແລະ ມາດຕະການແກ້ໄຂ ໂດຍສຸມໃສ່ 7 ວຽກຈຸດສຸມ ມາຮອດປະຈຸບັນມີຄວາມຄືບໜ້າ ໃນແຕ່ລະດ້ານ ດັ່ງນີ້:

1. ການຊຸກຍູ້ສົ່ງເສີມການຜະລິດ-ທຸລະກິດແລະການບໍລິການ: ການຜະລິດເພື່ອທົດແທນການນຳເຂົ້າໄດ້ໂຈະການນຳເຂົ້າພືດຜັກໄດ້ 30 ຊະນິດ, ໝາກໄມ້ 12 ຊະນິດ ແລະ ຜະລິດຕະພັນສັດ ທີ່ສາມາດຜະລິດໄດ້ຢູ່ພາຍໃນ, ສາມາດຫຼຸດຜ່ອນການນຳເຂົ້າພືດຜັກໄດ້ 72% ແລະຜະລິດຕະພັນສັດໄດ້ 94%, ອັດຕາການຂະຫຍາຍຕົວຂອງຝູງສັດເພີ່ມຂຶ້ນເຖິງ 20,95% ທຽບໃສ່ປີ 2020.

2. ການສ້າງຄວາມຄວາມເຂັ້ມແຂງດ້ານການຈັດເກັບລາຍຮັບງົບປະມານ: ໄດ້ນຳໃຊ້ລະບົບທັນສະໄໝ (ລະບົບເອເລັກໂຕນິກ) ໃນການຄຸ້ມຄອງຈັດເກັບລາຍຮັບດ້ານພາສີອາກອນ, ສາມາດຕິດຕັ້ງ ແລະ ນຳໃຊ້ລະບົບ TaxRis ສຳເລັດໂດຍພື້ນຖານ 11 ເມືອງ ທົ່ວແຂວງ, ເຊິ່ງມີ 3,550 ຫົວໜ່ວຍລາຍຮັບໄດ້ບັນທຶກເຂົ້າໃນລະບົບ, ເທົ່າກັບ 51,47% ຂອງຫົວໜ່ວຍລາຍຮັບທົ່ວແຂວງ. ຂະຫຍາຍຖານອາກອນມູນຄ່າເພີ່ມໄດ້ 47,08%.

3. ການຄຸ້ມຄອງລາຍຈ່າຍ ແລະ ປະຕິບັດມາດຕະການປະຫຍັດ: ໂດຍລວມແລ້ວອົງການປົກຄອງແຂວງໄດ້ປະຕິບັດຕາມ ຄຳສັ່ງຂອງສູນກາງໄດ້ຢ່າງມີປະສິດຕິຜົນໃນການເບີກຈ່າຍງົບປະມານ.

4. ວຽກງານສົ່ງເສີມການລົງທຶນ, ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ: ສ້າງບັນຊີດຶງດູດການລົງທຶນໄດ້ 123 ໂຄງການ, ທົ່ວແຂວງມີມູນຄ່າການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ 165,87 ລ້ານໂດລາສະຫະລັດ. ນອກນັ້ນ, ຍັງອຳນວຍຄວາມສະດວກໃນການລົງທຶນຂອງຕ່າງປະເທດໃນການປູກພືດລະດູແລ້ງເພື່ອສົ່ງອອກເຊັ່ນ: ໝາກໂມ, ຖົ່ວເຫຼືອງ, ເຂົ້າ ແລະ ມັນຕົ້ນ. ພ້ອມດຽວກັນນີ້ໄດ້ປ່ອຍສິນເຊື່ອໃຫ້ແກ່ທຸລະກິດຜູ້ປະກອບການພາຍໃນໄດ້ທັງໝົດ 342,2 ຕື້ກີບ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 4,36%.

5. ວຽກງານຊຸກຍູ້ລັດວິສາຫະກິດໃຫ້ແຂງແຮງ: ສາຂາລັດວິສາຫະກິດ ແລະ ບໍລິສັດລັດທີ່ເຄື່ອນໄຫວພາຍໃນແຂວງຫັນເປັນທັນສະໄໝ, ດຳເນີນທຸລະກິດຢ່າງມີຜົນກຳໄລ.

6. ວຽກງານການແກ້ໄຂໜີ້ສິນສາທາລະນະ ແລະ ໜີ້ສິນການລົງທຶນຂອງລັດ: ບັນດາໂຄງການຕ່າງໆທີ່ປະຕິບັດຊັກຊ້າ, ບໍ່ມີປະສິດຕິຜົນ, ບັນດາໂຄງການທີ່ກວດສອບທັກທ້ວງ. ໂຄງການທີ່ມີມູນຄ່າເກີນຄວາມເປັນຈິງສາມາດຫຼຸດມູນຄ່າລົງໄດ້ຈຳນວນ 53 ໂຄງການ, ເປັນມູນຄ່າ 54,46 ຕື້ກີບ. ສາມາດແກ້ໄຂໜີ້ການລົງທຶນໄດ້ 289 ຕື້ກີບ, ຫຼຸດລົງ 30% ຂອງໜີ້ທັງໝົດ.

7. ວຽກງານການຍົກສູງປະສິດທິຜົນການຄຸ້ມຄອງລັດດ້ວຍກົດໝາຍ: ນອກຈາກໄດ້ອອກນິຕິກຳເພື່ອຈັດຕັ້ງປະຕິບັດວາລະແຫ່ງຊາດແລ້ວ ຍັງໄດ້ສືບຕໍ່ເຜີຍແຜ່, ຊຸກຍູ້ການປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍຢ່າງເປັນປົກກະຕິ, ສາມາດອັດຊ່ອງຫວ່າງການສວຍໃຊ້ໂອກາດຂອງພະນັກງານ, ສະມາຊິກພັກໄດ້ດີ, ຜູ້ຜິດແມ່ນໄດ້ຮັບການປະຕິບັດວິໄນ, ມີການແບ່ງຂັ້ນຄຸ້ມຄອງໃນການຄຸ້ມຄອງເສດຖະກິດ-ສັງຄົມ ລະຫວ່າງແຂວງ ແລະ ເມືອງ ຢ່າງລະອຽດໃນຫຼາຍຂົງເຂດວຽກງານ.

ຂໍ້ຫຍຸ້ງຍາກ: (1) ຄວາມເປັນເຈົ້າການຂອງຂະແໜງການຈຳນວນໜຶ່ງ ໃນການປະຕິບັດວຽກງານຈຸດສຸມ ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ບໍ່ທັນເອົາໃຈໃສ່ເທົ່າທີ່ຄວນ, (2) ການປະສານງານລະຫວ່າງຂະແໜງການພາກລັດ-ເອກະຊົນຍັງບໍ່ທັນໄດ້ດີເຮັດໃຫ້ການແກ້ໄຂບັນຫາຍັງບໍ່ທັນສະພາບການ ເຖິງຈະສ້າງ ແລະ ປະກາດໃຊ້ນິຕິກຳຄຸ້ມຄອງທຸລະກິດຕ່າງໆ ແຕ່ກໍຍັງມີການຄ້ານອກລະບົບ ການຊຳລະສະສາງບໍ່ຜ່ານລະບົບທະນາຄານ, ຈຳນວນໜຶ່ງກໍມີສັນຍາຊື້-ຂາຍ

ອ່ານຕໍ່ໜ້າ 8





## ສສຂ...

(ຕໍ່ຈາກໜ້າ 1)

ໄໝສາມັນເທື່ອທີ6 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະຂອງສະພາປະຊາຊົນແຂວງ (ສພຂ) ຊຸດທີ II ໃຫ້ປະຊາຊົນໄດ້ຮັບຮູ້ບັນດາເນື້ອໃນສຳຄັນຕ່າງໆທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະພາ ທັງເປັນການຢ້ຽມຢາມ-ຖາມຂ່າວ, ຟັງຄຳຄິດເຫັນ ແລະ ຄຳສະເໜີຂອງພໍ່ແມ່ປະຊາຊົນຢູ່ 6 ບ້ານຂອງເມືອງຄຳເກີດຄື: ນາກະດົກ, ນາໄຮ, ນໍ້າພາວ, ວັງກໍ່, ປຸ່ງປ່າຕາວ, ກວນຈັນ ເຊິ່ງມີພະແນກການທີ່ກ່ຽວຂ້ອງ, ພະນັກງານກໍ່ສ້າງຮາກຖານ ຕະຫຼອດຮອດພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນບ້ານເຂົ້າຮ່ວມຢ່າງພ້ອມພຽງ.

ການລົງເຄື່ອນໄຫວເຜີຍແຜ່ໃນຄັ້ງນີ້ ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບຈຸດພິເສດທີ່ຕັ້ງ, ການຊີ້ນຳໆພາຂອງອົງການປົກຄອງແລະການພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມາ ພ້ອມຄຳສະເໜີຈາກທ່ານນາຍບ້ານຂອງແຕ່ລະບ້ານ ທີ່ພົວພັນກັບຫຼາຍບັນຫາ ເປັນຕົ້ນແມ່ນບັນຫາທີ່ດິນ, ບັນຫາລາຄາສິນຄ້າເພີ່ມຂຶ້ນສູງ ຕໍ່ ສສຊ ແລະ ສສຂ ເພື່ອຂໍທິດຊີ້ນຳແລະຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຊ່ວຍຕາມຄວາມເໝາະສົມ.

ຈາກນັ້ນ, ສະມາຊິກສະພາ ກໍໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ໂດຍໄດ້ຍົກໃຫ້ເຫັນບັນຫາສຳຄັນຕ່າງໆທີ່ໄດ້ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາ ແລະ ບັນດາເນື້ອໃນຕ່າງໆທີ່ ສສຊ, ສສຂ ໄດ້ສະເໜີຕໍ່ກອງປະຊຸມ ໂດຍສະເພາະບັນດາປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນໃນສັງຄົມກໍຄືແຂວງບໍລິຄຳໄຊ; ພ້ອມກັນນັ້ນ, ກໍໄດ້ຮັບຟັງຄຳສະເໜີຈາກພໍ່ແມ່ປະຊາຊົນ ແລະ ຮັບເອົາຄຳຄິດຄຳເຫັນ, ຄຳສະເໜີຂັດຂ້ອງໝອງໃຈຂອງປະຊາຊົນເພື່ອນຳໄປຄົ້ນຄວ້າ, ພິຈາລະນາ ແລະ ສະເໜີຕໍ່ອົງການປົກຄອງແຂວງ-ເມືອງ ເພື່ອແກ້ໄຂ ແລະ ອະທິບາຍ-ຊີ້ແຈງໃຫ້ປະຊາຊົນຮັບຊາບ.

ໂອກາດທີ່ມາເຄື່ອນໄຫວວຽກງານທີ່ເມືອງຄຳເກີດຄັ້ງນີ້, ໃນວັນທີ 24 ມັງກອນ ຄະນະຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ຕາງໜ້າໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າຊາວເມືອງຄຳເກີດ ໄດ້ນຳເອົາກະຕ່າຂອງຂວັນອວຍພອນຄະນະພັກ-ຄະນະບັນຊາ, ນາຍ ແລະ ພົນທະຫານ ກອງຮ້ອຍ ຄ25, ກອງພັນຂົນສົ່ງ 402 ແລະ ກອງບັນຊາການທະຫານເມືອງຄຳເກີດເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ(20/01/1949-20/01/2024) ເພື່ອເປັນການສະແດງເຖິງຄວາມຮູ້ບຸນຄຸນ ແລະ ຄຸນງາມຄວາມດີຂອງນັກຮົບປະຕິວັດ ໃນພາລະກິດປົກປັກຮັກສາປະເທດຊາດຢ່າງເດັດດ່ຽວແລະກ້າຫານໃນການຕໍ່ສູ້ກັບສັດຕູ ຈົນສາມາດຍາດໄດ້ໄຊຊະນະມາສູ່ປະເທດລາວເຮົາ.

**(ນາງ ໂສລະຢ້າ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສສຂ), ຄະນະປະຈຳພັກແຂວງ, ຫົວໜ້າພະແນກການຂອງແຂວງ, ເຈົ້າເມືອງ, ອະດີດການນຳຂັ້ນສູງຂອງແຂວງແລະແຂກຖືກເຊີນ.

ກອງປະຊຸມຄັ້ງນີ້ ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ລວມມີ 9 ເນື້ອໃນຄື: ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແລະ ແຜນງົບປະມານແຫ່ງລັດປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024, ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະການແກ້ໄຂບັນຫາຢາເສບຕິດ ໄລຍະ3ປີ(2021-2023), ບົດລາຍງານຂອງອົງການກວດສອບປະຈຳພາກກາງ ກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ2024, ບົດລາຍງານຜົນການກວດສອບຄືນບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2022 ແລະ ແຜນການກວດສອບຄືນບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023, ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024, ບົດລາຍງານຜົນການກວດກາຕາມຜົນການກວດສອບປະຈຳປີ 2021 ແລະ ແຜນການກວດກາຕາມຜົນການກວດສອບປະຈຳປີ 2022, ບົດລາຍງານຂອງສານປະຊາຊົນແຂວງກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024, ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024, ແລະ ບົດລາຍງານຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2024.

ນອກນັ້ນ, ຍັງຈະໄດ້ຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງງຄຳມ່ວນ ກ່ຽວກັບວຽກງານການສ້າງ ແລະ ປັບປຸງນິ ຕິກຳໃຕ້ກົດໝາຍຂອງແຂວງ ຈຳນວນ 03 ບົດຄື: ຂໍ້ຕົກລົງວ່າດ່ວຍການຫຼຸດຜ່ອນອຸບັດເຫດ ແລະ ການຮັກສາຄວາມປອດໄພຕາມທ້ອງຖະໜົນຫຼວງພາຍໃນແຂວງ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດ ແລະ ການຕ້ານ, ສະກັດກັ້ນການກະທຳຄວາມຜິດຕ່າງໆຜ່ານທາງລະບົບຄອມພິວເຕີພາຍໃນແຂວງ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແລະພັດທະນາທີ່ດິນປ່າໄມ້ທົ່ວແຂວງ; ແລະຮັບຟັງການຊີ້ແຈງໃນບັນດາຂົງເຂດວຽກງານຕ່າງໆທີ່ຕິດພັນກັບບົດ ລາຍງານທີ່ໄດ້ພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້.

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ຈະດຳເນີນໄປໃນລະຫວ່າງວັນທີ 23-26 ມັງກອນ 2024 ເປັນເວລາ 3 ວັນເຄິ່ງ ຈຶ່ງຈະສຳເລັດ, ທ່ານສາມາດສົ່ງຄຳຄິດຄຳເຫັນກ່ຽວກັບການດຳເນີນກອງປະຊຸມ ຜ່ານໂທລະສັບສາຍດ່ວນ 051 156 (ໂດຍບໍ່ເສຍຄ່າ).

**(ເອື້ອ ມະໂນສິງ)**

## ບັນຫາ...

(ຕໍ່ຈາກໜ້າ 7)

ຢູ່, (3) ນະໂຍບາຍການເຂົ້າເຖິງສິນເຊື່ອທະນາຄານ ແລະ ສະຖາບັນການເງິນ ຍັງມີລັກສະນະສັບສົນການນຳໃຊ້ທຶນຮອນຂອງຜູ້ຮັບສິນເຊື່ອສ່ວນໜຶ່ງຍັງບໍ່ທັນຖືກເປົ້າໝາຍ ບໍ່ສາມາດຊຳລະຕາມສັນຍາ ກາຍເປັນໜີ້ສິນທວງຍາກ.

**III. ທິດທາງໃນການແກ້ໄຂບັນຫາດັ່ງກ່າວໃນຕໍ່ໜ້າ ມີດັ່ງນີ້:**

1. ສືບຕໍ່ເຜີຍແຜ່ບັນດາເອກະສານວາລະແຫ່ງຊາດຢູ່ຂັ້ນແຂວງ, ເມືອງ ແລະ ຕາມຂະແໜງສາຍຕັ້ງລົງສູ່ຂັ້ນຮາກຖານບ້ານ ໂດຍເລັ່ງໃສ່ເປົ້າໝາຍກຸ່ມສ່ຽງ ເປັນຕົ້ນ ກຸ່ມໃຊ້ແຮງງານ ແລະຜູ້ອອກແຮງງານ, ນັກຮຽນ-ນັກສຶກສາ, ຖັນແຖວໄວໜຸ່ມຕະຫຼອດຮອດປະຊາຊົນບັນດາເຜົ່າ ໃນເຂດຫ່າງໄກສອກຫຼີກ, ປຸກລະດົມກຳລັງແຮງຂອງທົ່ວສັງຄົມ ເຂົ້າຮ່ວມວຽກງານໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດ.

2. ຈັດຕັ້ງການຄົ້ນຄວ້າບັນດາຮູບແບບ, ກົນໄກ, ວິທີການອັນໃໝ່ ເພື່ອສືບຕໍ່ສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍ ເພື່ອຮັບໃຊ້ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງສະພາບແວດລ້ອມໃນປັດຈຸບັນ;

3. ສືບຕໍ່ຍົກສູງປະສິດທິພາບດ້ານການຄຸ້ມຄອງ, ຊີ້ນຳໃນການຈັດຕັ້ງປະຕິບັດຮອບດ້ານ ໃນການແກ້ໄຂບັນຫາຢາເສບຕິດ ໂດຍສຸມໃສ່ແກ້ໄຂບັນດາລາຍຄະດີຢາເສບຕິດ ໃຫ້ເປັນໄປຕາມຂະບວນຍຸຕິທຳ ເປັນຕົ້ນ ການສືບສວນ-ສອບສວນປະກອບສຳນວນຄະດີ, ການຄົ້ນຄວ້າພິຈາລະນາສັ່ງຟ້ອງຜູ້ຖືກຫາ ແລະການພິຈາລະນາຕັດສິນຄະດີຢາເສບຕິດ ໃຫ້ມີຄວາມເດັດຂາດ, ໂປ່ງໃສຕາມກົດໝາຍວ່າດ້ວຍຢາເສບຕິດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

4. ສືບຕໍ່ພົວພັນຮ່ວມມືກັບບັນດາກອງບັນຊາການ ປກສ ແຂວງ ຂອງ ສສ. ຫວຽດນາມ ໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ; ສືບຕໍ່ຮ່ວມມືກັບກຳລັງຜາເມືອງ, ກອງທັບພາກທີ 3 ຂອງຣາຊາອະນາຈັກໄທ ເພື່ອແລກປ່ຽນຂໍ້ມູນດ້ານອາຊະຍາກຳຢາເສບຕິດຕາມຊາຍແດນລາວ-ໄທ.

5. ທຸກພາກສ່ວນ ທຸກຂົງເຂດຂະແໜງການ ໄດ້ຖືເອົາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນບັນຫາເຄັ່ງຮ້ອນ ເປັນບຸລິມະສິດ ພ້ອມກັນສຸມໃສ່ຫັນເປັນແຜນການລະອຽດ ສອດຄ່ອງ ມີຄວາມສາມາດເປັນໄປໄດ້ ແລະ ນຳພາ-ຊີ້ນຳການຈັດຕັ້ງປະຕິບັດຢ່າງໃກ້ຊິດ ແລະ ມີຫຼັກການ.

6. ການປະສານງານກັນລະຫວ່າງທະນາຄານ ກັບຂະແໜງການທີ່ກ່ຽວຂ້ອງໃນການຕິດຕາມຊຸກຍູ້ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ, ກາງແລະຈຸນລະວິສາຫະກິດໃຫ້ໄປຕາມແຜນພັດທະນາຂອງຂະແໜງການ, ພ້ອມທັງສ້າງລະບົບຕິດຕາມການ ຈັດຕັ້ງປະຕິບັດຮ່ວມກັນ.

7. ສ້າງກົນໄກທີ່ເໝາະສົມໃນການຄຸ້ມຄອງການນຳແຫຼ່ງທຶນເພື່ອມາເຮັດການຜະລິດ, ການສົ່ງອອກ ໂດຍໃຫ້ຜ່ານລະບົບທະນາຄານໃຫ້ຫຼາຍຂຶ້ນ.

+ບັນຫາທີ່ພົ້ນເດັ່ນແລະຂໍ້ຫຍຸ້ງຍາກ ໃນຂອບເຂດຄວາມຮັບຜິດຊອບເຄື່ອນໄຫວຜ່ານມາ:

1) ການລົງພົບປະຜູ້ມີສິດເລືອກຕັ້ງ ພາຍຫຼັງ ກອງປະຊຸມສະໄໝສາມັນແຕ່ລະຄັ້ງພວກເຮົາໄດ້ເຮັດເປັນຈຳນວນຫຼວງຫຼາຍ ເພື່ອນຳເອົາມະຕິ ແລະ ຜົນສຳເລັດກອງປະຊຸມສະໄໝສາມັນແຕ່ລະຄັ້ງ ໄປເຜີຍແຜ່, ແຕ່ການແກ້ໄຂຄຳຮ້ອງ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ຍັງຊັກຊ້າແກ່ຍາວ; ຍ້ອນຄວາມຮັບຮູ້ເຂົ້າໃຈແລະເອົາໃຈໃສ່ຂອງຂະແໜງການ, ພາກສ່ວນກ່ຽວຂ້ອງ ບໍ່ທັນດີເທົ່າທີ່ຄວນ, ກົນໄກການປະສານງານລະຫວ່າງ ສະພາປະຊາຊົນແຂວງ ກໍຄື ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງກັບອົງການປົກຄອງແຂວງ ແລະ ຂະແໜງການກ່ຽວຂ້ອງ, ເມືອງຍັງບໍ່ທັນດີເທົ່າທີ່ຄວນ.

● ວິທີການແກ້ໄຂ: ຈະສົມທົບກັບ ອົງການປົກຄອງແຂວງ ຈັດຕັ້ງການສະຫຼຸບຖອດຖອນບົດຮຽນຮ່ວມກັນ:

- ກຳນົດທິດທາງ ແລະ ມາດຕະການແກ້ໄຂນຳກັນ.
- ປັບປຸງກົນໄກປະສານງານ, ມີການສະຫຼຸບ ແລະ ຖອດຖອນບົດຮຽນ - ເປັນແຕ່ລະໄລຍະ, ເປັນໄຕມາດ, ເປັນປີ ຕາມຄວາມເໝາະສົມ.
- ຈັດຕັ້ງໃຫ້ມີຄະນະຮັບຜິດຊອບແກ້ໄຂ ຢູ່ແຕ່ລະພະແນກການ, ອົງການ, ກົມກອງ. ກຳນົດຂັ້ນຕອນ ແລະ ເວລາໃນການຊີ້ແຈງ.

2) ການຕົກລົງບັນຫາພື້ນຖານຂອງຊາດ-ຂອງທ້ອງຖິ່ນ ເປັນຕົ້ນ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ, ການລົງທຶນ ແລະ ການຕິດຕາມ ລາຍຮັບງົບປະມານຂອງສູນກາງຢູ່ທ້ອງຖິ່ນ, ເວົ້າລວມ ສາມາດຈັດຕັ້ງປະຕິບັດໄດ້ຫຼາຍ. ແຕ່ເຫັນວ່າປະສິດທິຜົນການລົງທຶນບາງໂຄງການຍັງຊັກຊ້າ, ແກ່ຍາວ; ຍ້ອນກົນໄກ ແລະ ງົບປະມານບໍ່ທັນຕອບສະໜອງ, ໜີ້ສິນຍັງຫຼາຍ ໂຄງການບໍ່ສາມາດຈັດຕັ້ງປະຕິບັດໄດ້.

●ເພື່ອແກ້ໄຂບັນຫາດັ່ງກ່າວ: (1) ທາງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ກໍຄື ສະພາປະຊາຊົນແຂວງ ໄດ້ເຊີນຂະແໜງການ ແລະ ບໍລິສັດ ມາຊີ້ແຈງ, (2) ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ຈັດຕັ້ງປະຕິບັດ, (3) ສະເໜີໃຫ້ລັດຖະບານ ກໍຄືກະຊວງທີ່ກ່ຽວຂ້ອງເພີ່ມງົບປະມານ, (4) ຊຸກຍູ້ໃຫ້ດຳເນີນການອວ່າຍໜີ້ 3 ແຈ ເພື່ອໃຫ້ບໍລິສັດ ໄດ້ມີກຳລັງແຮງສືບຕໍ່ຈັດຕັ້ງປະຕິບັດ.

3) ດ້ານນິຕິກຳ: ຜ່ານມາສະພາແຫ່ງຊາດ ໄດ້ຮັບຮອງຫຼາຍກົດໝາຍ, ລັດຖະບານແລະອົງການປົກຄອງທ້ອງຖິ່ນ ໄດ້ອອກນິຕິກຳໃຕ້ກົດໝາຍຫຼາຍສະບັບ, ແຕ່ຍັງບໍ່ທັນຕອບສະໜອງຄວາມຕ້ອງການ, ການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າຍັງພົບຄວາມຫຍຸ້ງຍາກ; ຍ້ອນຄວາມຮັບຮູ້ ເອົາໃຈໃສ່ຂອງຂະແໜງການ, ງົບປະມານຈຳກັດ.

●ຕໍ່ບັນຫາດັ່ງກ່າວ:(1) ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເຜີຍແຜ່ ແລະ ຜັນຂະຫຍາຍເປັນອັນລະອຽດ; (2) ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງສົມທົບກັບອົງການປົກຄອງແຂວງ ຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຜົນ; (3) ຊຸກຍູ້ຂະແໜງການອອກເປັນນິຕິກຳສະເພາະ.

ພ້ອມນັ້ນ, ທ່ານປະທານສະພາປະຊາຊົນແຂວງຍັງໄດ້ຝາກເຖິງພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງ ເວົ້າສະເພາະ ແລະ ເວົ້າລວມ ກໍຄື ປະຊາຊົນບັນດາເຜົ່າໃນທົ່ວປະເທດ: ເພື່ອເຮັດໃຫ້ທິດທາງແລະແຜນວຽກຈຸດສຸມ ໃນຕໍ່ໜ້າໄດ້ຮັບການຈັດຕັ້ງປະຕິບັດ ໄດ້ຮັບຜົນດີ, ຮຽກຮ້ອງມາຍັງພະນັກງານ, ທະຫານ, ຕຳຫຼວດ ແລະປະຊາຊົນບັນດາເຜົ່າ ກໍຄື ຜູ້ມີສິດເລືອກຕັ້ງພາຍໃນແຂວງ ເຊີດຊູຄວາມເປັນເຈົ້າເຂົ້າຮ່ວມປະຕິບັດສິດ, ພັນທະຂອງຕົນ, ສືບຕໍ່ໃຫ້ການສະໜັບສະໜູນ ສະພາແຫ່ງຊາດ ກໍຄື ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນ.




# ປີໃໝ່ ກ້າທີ່ຈະປ່ຽນແປງ

# ດົ້ນກົບເມກ



ປີໃໝ່ ຖ້າຊີວິດຍັງບໍ່ດີຂຶ້ນພຽງພໍ ເຮົາຕ້ອງກ້າທີ່ຈະປັບປຸງປ່ຽນແປງ, ກ້າທີ່ຈະປ່ຽນໂຕເອງ, ກ້າທີ່ຈະປະພຶດດີຂຶ້ນໃຫ້ຄອບຄົວເຫັນການປ່ຽນແປງ-ກ້າທີ່ຈະເສຍສະຫຼະເພື່ອຊາດ ແລະ ສັງຄົມ, ການປ່ຽນແປງທາງດີຂຶ້ນຕ້ອງອາໄສຄວາມຄິດຈິດໃຈທີ່ກ້າຫານປ່ຽນແປງ ເລີກລະສິ່ງບໍ່ດີ ນິໄສບໍ່ດີ, ພຶດຕິກຳບໍ່ດີ, ເລີກລະອະບາຍະມຸກທີ່ທຳລາຍໂຕເອງ-ຄອບຄົວ ແລະ ປະເທດຊາດ, ອະບາຍະມຸກຄື: ປາກທາງແຫ່ງຄວາມເສື່ອມ ທຸກຄົນທີ່ຕິດອະບາຍຍະມຸກ ຈຶ່ງຢ່າຫວັງຄວາມຈະເລີນແກ່ຊີວິດ.

ອະບາຍະມຸກ ທີ່ແປວ່າ ປາກທາງແຫ່ງຄວາມເສື່ອມ 6 ປະການນັ້ນ ມັນກໍມີມູນເຫດມາຈາກຄວາມໂລບ, ຄວາມຫຼົງ (1) ດື່ມນ້ຳເມົາ (2) ທ່ຽວກາງຄືນ (3) ທ່ຽວຫຼິ້ນເບິ່ງງານບຸນທຸກທີ່ (4) ຫຼິ້ນການພະນັນ (5) ຄົບຄົນຊົ່ວເປັນໝູ່ (6) ຂີ້ຄ້ານເຮັດວຽກ, ໂທດຂອງອະບາຍະມຸກ ດື່ມນ້ຳເມົາເສຍຊັບເສຍສຸຂະພາບເປັນເຫດໃຫ້ຜິດຖຽງກັນເສຍກຽດສັກສີ, ທ່ຽວກາງຄືນໃຫ້ຄົນລະແວງສົງໄສ, ບໍ່ຮັກສາໂຕ, ຜູ້ຕິດການພະນັນ ເສຍຊັບຄອບຄົວຍາກຈົນ, ຜູ້ຫຼິ້ນການພະນັນ ສ່ວນໃຫຍ່ບູຮານວ່າ ເປັນຄົນພານ ມີຄວາມໂລບ ມັກໃຊ້ເລ່ຫຼ່ຽມກົນໂກງໃສ່ກັນ, ຜູ້ຕິດການພະນັນມັກຖືກຄົນນິນທາໃນທາງເສື່ອມເສຍ ເພາະບໍ່ເອົາໃຈໃສ່ຄອບຄົວ ບາງກໍລະນີເສຍຊັບໝົດໂຕເສຍຄວາມຄິດ ຄອບຄົວແຕກແຍກ ກາຍເປັນບັນຫາແກ່ສັງຄົມ.

ໂທດໂຕສຸດທ້າຍຂອງອະບາຍະມຸກຄື: ຄວາມຂີ້ຄ້ານ ມັກງ່າຍ ວຽກງານກໍຄ້າງຄາ ຢ່າລືມວ່ານິໄສຂີ້ຄ້ານມັນທຳລາຍຄົນໃນໂຕມັນເອງ ວຽກບໍ່ເຮັດ ງານບໍ່ສ້າງ ຊັບຍ່ອມບໍ່ມີ ພາໃຫ້ຜິດຖຽງແຕກແຍກໃນຄອບຄົວ ບາງຄົນແຕ່ລະມື້ແຕ່ງໂຕໂກ້ທ່ຽວຫຼິ້ນ ປານນັກທຸລະກິດພັນລ້ານ ທີ່ແທ້ເລາະຢືມເງິນໝູ່ມາຈ່າຍ; ຄົນຂີ້ຄ້ານສັງຄົມກໍຕີຫ່າງໄກ ບໍ່ມີໃຜຢາກຈ້າງເຮັດວຽກ ຂີ້ແບະແງະງອນ ມັກມີຂໍ້ອ້າງໜາວ ແລະ ຮ້ອນ, ກິນອີ່ມ ຫຼື ຫິວ ກໍຫາຂໍ້ອ້າງບໍ່ຢາກເຮັດວຽກ.

ສັງລວມວ່າ: ປີໃໝ່ເຮົາຢາກໃຫ້ຊີວິດກ້າວໜ້າ ຕ້ອງກ້າປ່ຽນແປງນິໄສ ແລະ ພຶດຕິກຳບໍ່ດີ, ບາງຄົນຍັງມັກດູຖູກຄົນອື່ນ ພຽງເພາະໄດ້ຜູ້ນຳຄອບຄົວລວຍມີເງິນ ກໍຍົກຫົວງູ ທາງຄ້າຍງົວລືມຕີນ ພາໃຫ້ໝູ່ຄູ່ຊິງຊັງຍ້ອນເຮັດໂຕໜ້າລັງກຽດ.




# ເກືອກກົ້ວ – ໝົກໝົ້ນ – ຄຸກຄີ

'ເກືອກກົ້ວ', 'ໝົກໝົ້ນ' ແລະ 'ຄຸກຄີ' ເປັນສາມຄຳທີ່ມີຄວາມໝາຍໃກ້ຄຽງກັນ ແຕ່ມີການໃຊ້ແຕກຕ່າງກັນດັ່ງນີ້:

'ເກືອກກົ້ວ' ເປັນຄຳປະສົມປະເພດຄຳກິລິຍາປະກອບດ້ວຍຄຳວ່າ 'ເກືອກ' ໝາຍເຖິງ "ກົ້ວ, ຄຸກຄີ, ກິ້ງກັບໄປກັບມາ" ແລະ 'ກົ້ວ' ໝາຍເຖິງ "ຄຸກຄີ, ຄົບຫາ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ເກືອກກົ້ວ' ກໍໝາຍເຖິງ "ເຮັດໃຫ້ມົວໝອງ, ເຮັດໃຫ້ເປື້ອນເປິ" ເຊັ່ນ

- ແມ່ຖາມແອນ້ອຍວ່າ "ໂສ້ງເສື້ອລູກ ໄປເກືອກກົ້ວຫຍັງມານໍ ຈຶ່ງເປື້ອນເອົາແທ້ເອົາວ່າ?"

'ເກືອກກົ້ວ' ຍັງມັກໃຊ້ໃນຄວາມໝາຍທາງສັງຄົມ ທີ່ໝາຍເຖິງ "ຄົບຫາສະມາຄົມ, ມົວສຸມ, ພົວພັນ, ຫຍຸ້ງກ່ຽວ" ເຊັ່ນ

- ຢ່າໄປເກືອກກົ້ວກັບຄົນພານ.
- ລາວເກືອກກົ້ວນຳອະບາຍະມຸກຈຶ່ງພາໃຫ້ລາວຕົກຕ່ຳ.
- ຍ້ອນເກືອກກົ້ວນຳສານເສບຕິດ ຈຶ່ງເຮັດໃຫ້ສຸຂະພາບຂອງລາວຊຸມໂຊມ.

'ໝົກໝົ້ນ' ເປັນຄຳປະສົມປະເພດຄຳກິລິຍາ ປະກອບດ້ວຍຄຳວ່າ 'ໝົກ' ໝາຍເຖິງ "ລີ້, ຢູ່ໃນບ່ອນທີ່ອັບເອົ້າ" ແລະ 'ໝົ້ນ' ໝາຍເຖິງ "ເອົາຫົວດຸດເຂົ້າ, ບຸ່ນເຂົ້າຫຼືອອກ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ໝົກໝົ້ນ' ກໍໝາຍເຖິງ "ສຸມໃສ່ແຕ່ເລື່ອງດຽວໂດຍບໍ່ສົນໃຈເລື່ອງອື່ນໆ" ເຊັ່ນ

- ລາວໝົກໝົ້ນຢູ່ກັບໜ້າວຽກທີ່ລາວຮັບຜິດຊອບ.
- ຢ່າໝົກໝົ້ນຢູ່ກັບອະບາຍະມຸກຫຼາຍ.
- ບາງຄົນກໍໝົກໝົ້ນຢູ່ນຳການຫຼິ້ນເກມ ພາໃຫ້ເສຍການຮ່ຳການຮຽນ.

'ໝົກໝົ້ນ' ນີ້ ບາງຄົນອາດຈະອອກສຽງເປັນ 'ໝົກໝຸ້ນ', 'ໝົກມຸ່ນ' ກໍມີ. ສ່ວນໃນພາສາໄທຈະອອກສຽງວ່າ 'ໝົກມຸ້ນ' (**หมกมุ่น**) ເຊິ່ງກໍມີຄວາມໝາຍອັນດຽວກັນ.

'ຄຸກຄີ' ເປັນຄຳກິລິຍາຈາກເຄົ້າພາສາໄທ ເຊິ່ງອອກສຽງວ່າ 'ຄລຸກຄລີ' (**คลุกคลี**)

ຄຳນີ້ເຫັນມີບັນທຶກຢູ່ໃນວັດຈະນານຸກົມລາວ-ຝຣັ່ງ ປີ 1970 ແລະວັດຈະນານຸກົມລາວ-ອັງກິດ ປີ 1972 ໝາຍເຖິງ "ໃຊ້ເວລາຢູ່ນຳຫຼືສົນໃຈຢູ່ນຳສິ່ງໃດສິ່ງໜຶ່ງ" ເຊັ່ນ

- ລາວຄຸກຄີຢູ່ນຳການອ່ານປຶ້ມມາແຕ່ສະໄໝເດັກນ້ອຍ.
- ອ້າຍອ້ອດຄຸກຄີຢູ່ນຳວຽກໄຮ່ການນາ.

'ຄຸກຄີ' ຍັງໝາຍເຖິງ "ເຂົ້າໃກ້ຊິດສະໜິດສະໜົມນຳ" ເຊັ່ນ

- ຢ່າໄປຄຸກຄີກັບຄົນບໍ່ດີ.
- ປ້າແດງຄຸກຄີຢູ່ກັບເດັກນ້ອຍຕັ້ງແຕ່ສະໄໝເປັນຄູອະນຸບານ




# ວິທີເຮັດວຽກ

## ພາກທີ 5
## ບັນຫາວິທີເຮັດວຽກ

ອາໄສການຮ່ວມມືກັນແນວນັ້ນ ວຽກທີ່ເດັກນ້ອຍເຫຼົ່ານັ້ນເຮັດກໍເລີຍໄດ້ຜົນກ່ອນເຮັດເອົາໃຜເອົາມັນຢູ່ເຮືອນ, ພີ່ນ້ອງຊາວບ້ານເຫັນແນວນັ້ນກໍພາກັນດີໃຈ ແລ້ວກໍບໍ່ພຽງແຕ່ປ່ອຍໃຫ້ເດັກນ້ອຍທີ່ໃຫຍ່ແລ້ວໄປຮຽນໜັງສືເທົ່ານັ້ນ, ແຕ່ຍັງສົ່ງເດັກທີ່ຍັງນ້ອຍໄປຝາກໄວ້ນຳນາຍຄູອີກ ເພື່ອໃຫ້ນາຍຄູສອນໜັງສື, ໄດ້ຈັກໂຕສອງໂຕຕື່ມ ກໍເອົາ. ນອກຈາກນັ້ນ ພວກຜູ້ໃຫຍ່ກໍຍິນດີໄປຮຽນໜັງສືນຳກັນອີກ ເມື່ອໂຮງຮຽນຮົ່ວ ນາຍຄູ ກ ກໍຢຶດເອົາເອງ, ແຕ່ວ່າພີ່ນ້ອງຊາວບ້ານເຫັນກໍພາກັນ ມາຢຶດຊ່ວຍ, ກ່ຽວກັບເດັກນ້ອຍທີ່ຂີ້ຄ້ານ, ຂີ້ດື້ນັ້ນ, ນາຍຄູ ກ ກໍບໍ່ຕີທຳໂທດ ມີແຕ່ໃຊ້ຄວາມດີ ຊີ້ແຈງອະທິບາຍຊັກຊວນບອກ ສອນໃຫ້ຜູ້ທີ່ຜິດຮູ້ຄວາມຜິດຂອງຕົນ ແລະ ໃຫ້ໝູ່ຄູ່ຜູ້ອື່ນຕຳໜິໃຫ້ຜູ້ທີ່ຜິດຊອກວິທີແກ້ໄຂປ່ຽນແປງຈົນວ່າ ເດັກຜູ້ໃດກໍຄ່ອຍໆກາຍເປັນຄົນຮູ້ຄວາມ.

ເມື່ອປະຊາຊົນບ້ານມີວຽກການຫຍັງ ນາຍຄູ ກ ກໍໄປຊ່ວຍເຮັດ, ເມື່ອມີຜູ້ໃດມີຄວາມຜິດຂ້ອງຕ້ອງຖຽງກັນ ນາຍຄູ ກ ກໍອາໄສຖານະທີ່ຕົນເປັນຄູສອນປະຈຳບ້ານໄປອົບຮົມແກ້ໄຂໃຫ້, ຈົນວ່າປະຊາຊົນຊາວບ້ານ ເປັນຕົ້ນພໍ່ແມ່ເດັກນ້ອຍນັກຮຽນຜູ້ໃດ ກໍຮັກແພງ ແລະ ນັບຖືນາຍຄູ ກ. ຊາວບ້ານໃກ້ຄຽງເຫັນແນວນັ້ນກໍພາກັນສົ່ງ ລູກມາຮຽນນຳອີກ ນາຍຄູ ກ ມີຄວາມຮູ້ພຽງແຕ່ຊັ້ນມູນລະສຶກສາ, ປານນັ້ນກໍຍັງເຮັດລ້ອນໜ້າວຽກທີ່ນາຍຄູໃຫຍ່ຫຼາຍຄົນເຮັດບໍ່ສຳເລັດ.

ອ່ານຕໍ່ສະບັບໜ້າ...



# ຂຽນຄໍາລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ສັບສົ່ | ຊັບສົ່ |
| ສັບສົນ | ຊັບສົນ |
| ສັບປ່ຽນ | ຊັບປ່ຽນ |
| ສັບປະດາ | ຊັບປະດາ |
| ສັບພະວິຊາ | ຊັບພະວິຊາ |
| ສັບພະນາມ | ຊັບພະນາມ |
| ສັບພະສິນຄ້າ | ຊັບພະສິນຄ້າ |
| ສັບປິ້ນຄົນເລ | ຊັບປິ້ນຄົນເລ |
| ສັບຊ້ອນພະນັກງານ | ຊັບຊ້ອນພະນັກງານ |



ສຸກສະບາຍຫາຍໂລດ

# 5 ວິທີຖະໜອມສາຍຕາ

**ໂດຍ: ທິວກະທິ**

ປັດຈຸບັນ, ຄົນເຮົາສ່ວນໃຫຍ່ຈະຈົດຈໍ່ຢູ່ກັບຄອມພິວເຕີ, ແທັບເລັດ, ໃຊ້ໂທລະສັບສະມາດໂຟນ, ປື້ມບັນທຶກ, ຈຶ່ງກໍ່ໃຫ້ເກີດບັນຫາກ່ຽວກັບຕາເຊັ່ນ: ອາການເຈັບຕາ, ຕາມົວ, ຕາແຫ້ງ, ຕາໂປ ລວມທັງອາການເຈັບຫົວ, ເຈັບຫຼັງ, ເຈັບຄໍ, ເຈັບບ່າ ແລະ ອື່ນໆເພື່ອຫຼີກລ່ຽງບັນຫາຕ່າງໆທີ່ກ່າວມານັ້ນ ມື້ນີ້, ໃນຄໍລຳສຸກສະບາຍຫາຍໂລດາມີວິທີຖະໜອມສາຍຕາມານຳສະເໜີ ເຊິ່ງມີຂັ້ນຕອນດັ່ງຕໍ່ໄປນີ້:

1. ຫຼັບຕາເລື້ອຍໆ ເພື່ອຫຼຸດຜ່ອນອາການຕາແຫ້ງຫຼືໃຊ້ນ້ຳຕາປອມຢອດໃສ່ຕາ ເພື່ອຊ່ວຍເພີ່ມຄວາມຊຸ່ມຊື່ນໃຫ້ແກ່ດວງຕາ.



2. ການຈັດວາງຄອມພິວເຕີໃຫ້ເໝາະສົມ ໂດຍໃຫ້ມີແສງສະຫວ່າງທີ່ພຽງພໍ ເພື່ອຈະຊ່ວຍຫຼຸດຜ່ອນການສະທ້ອນໃນໜ້າຈໍ; ພ້ອມນັ້ນ, ຕ້ອງຕັ້ງລະດັບຈໍພາບຈາກຈຸດສູນກາງຂອງຈໍໃຫ້ຢູ່ຕ່ຳກວ່າລະດັບສາຍຕາປະມານ 4-9 ນິ້ວ ຫຼື ຕ່ຳກວ່າລະດັບສາຍຕາ ແລະ ໜ້າຈໍກໍບໍ່ຄວນສູງເກີນໄປ ຫຼື ຕ່ຳເກີນໄປ.

3. ເລືອກໃຊ້ຕົວອັກສອນຂະໜາດໃຫຍ່ໃນເວລາພິມເອກະສານຕ່າງໆ ແລະ ປັບຄວາມເຂັ້ມຂອງຕົວອັກສອນໃຫ້ເຂັ້ມຂຶ້ນ.

4. ເລືອກແວ່ນຕາທີ່ເໝາະສົມກັບຄອມພິວເຕີ ທີ່ຜະລິດເພື່ອກັ່ນຕອງແສງຈາກໜ້າຈໍໂດຍສະເພາະ ແລະ ໃຊ້ເລນສີຂຽວອ່ອນ ເພື່ອຊ່ວຍຜ່ອນຄາຍສາຍຕາ ແລະ ຍັງຫຼຸດແສງສະທ້ອນຈາກຈໍພາບອີກດ້ວຍ.

5. ພັກຜ່ອນສາຍຕາຂອງທ່ານທຸກໆຊົ່ວໂມງ ໂດຍການປ່ຽນທ່າທາງ ຫຼື ລຸກຂຶ້ນບິດໂຕໄປ-ມາ ເພື່ອພັກຜ່ອນສາຍຕາ ແລະ ປ້ອງກັນອາການປວດເມື່ອຍຈາກການໃຊ້ຄອມພິວເຕີເປັນເວລານານ.

**ແຫຼ່ງຂໍ້ມູນຈາກ:**
**www.nationtv.tv**



ມ່ວນຊື່ນ ສະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❊ **ເດືອນ**ມັງກອນ **ຜ່ານພົ້ນໄປ** ກິດຈະກຳຍິ່ງໃຫຍ່ພອມຄຶກຄື້ນໃນຕອນນີ້ ເຫັນວ່າມີ**ຫຼາຍແຂວງ**ກຳລັງກະກຽມໃສ່**ປີທ່ອງທ່ຽວລາວ** ແລະ ຫຼາຍຂ່າວທີ່ນຳສະເໜີ ລ້ວນແຕ່ກ່ຽວພັນ**ກັບກິດຈະກຳການ**ທ່ອງທ່ຽວຢ່າງ**ຟົດຟື້ນ** ໃນນັ້ນ, ອັນ**ພິເສດ**ກວ່າໝູ່ແມ່ນ ການສະໜອງໝາຍເລກໂທລະສັບ **ສຳລັບນັກທ່ອງທ່ຽວ** ທີ່ຮອງຮັບ **5G** ອິນເຕີເນັດຄວາມໄວສູງ ຂໍຊົມເຊີຍຍົກຍ້ອງ ແລະ ຂອບໃຈແທນນັກທ່ອງທ່ຽວພອມເດີນທາງມາ **ແຕ່ຢ່າລືມ**ເຕີມຄວາມໄວ ໃຫ້ແກ່**ຊິມທີ່ຊົມໃຊ້** ຕັ້ງແຕ່ໃດມາດົນແລ້ວ **ຢ່າວາງປະລາປ່ອຍ**ທ່ານເອີຍ! ຂໍໃຫ້ເພີ່ມຄວາມໄວ**ຕື່ມເລັກໜ້ອຍ** ຄືຊິມບ້ອງເປີດເທື່ອລຸບ **ແນ່ເດີ!**

❊ **ສະ**ບາຍດີ**ປີໃໝ່** ເຊິ່ງໄລຍະນີ້ ເຫັນວ່າພໍ່ແມ່ພີ່ນ້ອງປະຊາຊົນຫຼາຍເຜົ່າ ພອມຢູ່ໃນ**ເທສະການ** ສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່ ຢ່າງ**ຄຶກຄື້ນ ແລະ ເບີກບານມ່ວນຊື່ນ** ພ້ອມນັ້ນ, ອີກບໍ່ເທົ່າໃດວັນຂ້າງໜ້າ ປະເທດເພື່ອນມິດໃກ້ຄຽງ ກໍຈະມີກິດຈະກຳ ປະຕິບັດຕາມຮີດຄອງປະເພນີ **ຕ້ອນຮັບປີໃໝ່ຢ່າງເປັນທາງການ** ແນວໃດກໍຕາມ ຂໍອາໄສເວທີນີ້ **ຝາກສົ່ງພອນໄຊ** ຂໍໃຫ້ມີຄວາມສຸກ ຊື່ນກາຍໃຈພ້ອມ ອັນວ່າໂລຄາໄຂ້ ໂພຍໄພເຫີນຫ່າງ ໄປເນີ! **ເງິນ-ຄຳ** ໄຫຼຫຼັ່ງລົ້ນ **ເຕັມແທ້ນອັ່ງຄັງ ທ່ານເອີຍ!**





# 2 ດີ 5 ເປັນເຈົ້າ

**# ເຂີຍໃຕ້**

❊ ບັດນີ້ ຮຽນຊີຂານຂ່າວຂໍ້
ຄຳຂວັນຂອງກຳມະບານລາວ
ພໍໄດ້ຈົດເອົາໄວ້
ຖືເປັນຄຳຂອດຂໍ້
ຂຽນຂີດເປັນອັກສອນ
ຜ່ານຄໍລຳກະວີເວົ້າ
ໃນໃຈຈຳຈື່
ເຮົາໄດ້ແຂ່ງຂັນ

❊ ສອງດີ ກ່າວໄວ້ນັ້ນ
ໃຫ້ພະນັກງານ-ລັດຖະກອນ
ຮູ້ຈັກນຳພາສ້າງ
ຊ່ວງເສັງກັນຊ່ວຍຍູ້
ວາງເພື່ອເປັນມາດຖານ
ເດັ່ນດີໂດຍແທ້
ຂະບວນກຳມະບານເກັ່ງ
ຊູຊວ້ານຊາດປະຊາ

❊ ກຳມະບານດີ 5 ເປັນເຈົ້າ
ເຈົ້າໜຶ່ງ ຄືໂຄສະນາ
ການເມືອງທັງກຳໄດ້
ແນວຄິດດີຖືກຕ້ອງ
ເຮົາໄຄວ່ຄວນຈຳ
ເພື່ອສຶກສາເລື້ອງ
ແນວທາງອັນໃສສ່ອງ
ມອງກວ້າງເບິ່ງໄກ

❊ ເຈົ້າສອງ ຄວນເຮັດໃຫ້
ພັດທະນາກຳມະບານ
ເປັນອົງການນຳໜ້າ
ເປັນຫຼັກການກໍ່ໃຫ້
ສານແກ່ນອົງການ
ຮຸ່ງເຮືອງຈະເລີນກ້າວ
ຕາມການນຳຂອງພັກ
ກຳມະບານກ້າວວ່ອງໄວ

❊ ເຈົ້າສາມ ປົກປ້ອງໄວ້
ເອົາສ່ວນລວມເປັນຫຼັກ
ເປັນຕົວແທນປົກປ້ອງ
ອັນຊອບທຳທ່ຽງແທ້
ສິດຜົນປະໂຫຍດຂອງປວງຊົນ
ເພື່ອຮັກສາສິດໄວ້
ສິດທັງຜົນປະໂຫຍດ
ຂອງຊາວຜູ້ອອກແຮງງານ

❊ ເຈົ້າສີ່ ກຳມະບານລາວຮ່ຳຮູ້
ເພື່ອກວດກາວຽກງານ
ວຽກສັງຄົມກໍກຳໄດ້
ວັດທະນະທຳຮອບຮູ້
ໂຮມຮ່ວມຕິດຕາມ
ເສດຖະກິດຄອງຄຸ້ມ
ໂດຍດີທັງລະອຽດ
ຄຽງຂ້າງຄູ່ກັນ

❊ ເຈົ້າຫ້າ ຮູ້ຈັດຕັ້ງ
ການຮ່ວມມືສາກົນ
ບໍ່ປ່ຽນແປງຜັນປີ້ນ
ທິດທາງພັກວາດໄວ້
ປະຕິບັດວຽກແນວທາງ
ທີ່ພັກວາງລົງໄວ້
ຫັນໄປແນວໃໝ່
ເຮົາຕ້ອງຈື່ໃສ່ໃຈ ແທ້ແລ້ວ!





😊 ຊວນຍິ້ມ 😊

# ແອ່ນຕຸ້ງ

## ເລື່ອງ: ການລົງທຶນທີ່ຜິດພາດ

ຜົວເມຍຄູ່ໜຶ່ງກຳລັງຄົກຖຽງກັນ ເລື່ອງການຊື້-ຂາຍຄ່າ ຜູ້ເປັນເມຍບອກໃຫ້ຜົວຂາຍຄຳທີ່ຊື້ປີກາຍ ເພາະຢ້ານລາຄາຄຳຊິຫຼຸດລົງຕື່ມ ແຕ່ຜູ້ເປັນຜົວບໍ່ຂາຍ ເພາະຄິດວ່າຄຳຊິຂຶ້ນຕື່ມຄືຕົ້ນປີຜ່ານມາ ຜູ້ເປັນເມຍຈຶ່ງຮ້າຍຂຶ້ນວ່າ: "ກອດການລົງທຶນທີ່ຜິດພາດໃນຊີວິດຂອງມຶງໄວ້ໂລດບັກໂງ່" ເມຍເອົ້າສຸດ ຜູ້ເປັນຜົວກໍຍ່າງໄປກອດເມຍ..........



ຄະຕິເຕືອນໃຈ

#ດອກຫຍ້າ

ມັກຢາມສະຫາຍ ເສຍຂອງຝາກ
ມັກປາກ ຫຼົງຄວາມຜິດ

ລັດຖະສະພາຕ່າງປະເທດ

# ການາດາ ຕໍ່ເວລາກົດໝາຍ "ຫ້າມຄົນຕ່າງປະເທດຊື້ເຮືອນ"




ກົດໝາຍຫ້າມຄົນຕ່າງປະເທດຊື້ອະສັງຫາລິມະຊັບໃນການາດາຈະມີຜົນບັງຄັບໃຊ້ອີກຢ່າງໜ້ອຍ 2 ປີ, ທ່າມກາງຄວາມພະຍາຍາມຂອງລັດຖະບານໃນການຄວບຄຸມລາຄາເຮືອນ.

ວັນທີ 07 ກຸມພາ 2024 ກະຊວງການເງິນການາດາ ໄດ້ອອກຖະແຫຼງການກ່ຽວກັບການຂະຫຍາຍໄລຍະເວລາບັງຄັບໃຊ້ກົດໝາຍຫ້າມຄົນຕ່າງປະເທດຊື້ເຮືອນ ອອກໄປອີກຢ່າງໜ້ອຍ 2 ປີ ຈາກກົດໝາຍສະບັບເດີມຈະໝົດອາຍຸໃນວັນທີ 01 ມັງກອນ 2025 ໃຫ້ມີຜົນບັງຄັບໃຊ້ຕໍ່ໄປອີກຈົນຮອດວັນທີ 01 ມັງກອນ 2027.

ໃນເລື່ອງນີ້, ການາດາ ໄດ້ອອກກົດໝາຍຫ້າມຜູ້ທີ່ບໍ່ແມ່ນພົນລະເມືອງການາດາຊື້ອະສັງຫາລິມະຊັບເພື່ອການຢູ່ອາໄສ ແລະ ບໍ່ອະນຸຍາດໃຫ້ນັກລົງທຶນຕ່າງປະເທດດຳເນີນການເຊັ່ນດຽວກັນ ເມື່ອປີ 2022 ແລະ ມີຜົນບັງຄັບໃຊ້ໃນອີກ 1 ປີຕໍ່ມາ, ໂດຍມີຂໍ້ຍົກເວັ້ນໃຫ້ສະເພາະພົນລະເມືອງຕ່າງປະເທດທີ່ມີສະຖານະພາບຜູ້ຢູ່ອາໄສຖາວອນທີ່ຖືກຕ້ອງຕາມກົດໝາຍ ແລະ ນັກສຶກສາຕ່າງປະເທດເທົ່ານັ້ນ.

ກົດໝາຍສະບັບນີ້ ສະເໜີໂດຍນາຍົກລັດຖະມົນຕີຈັດຕິນ ທຣູໂດ (Justin Trudeau) ເມື່ອປີ 2021 ເພື່ອບັນເທົາຄວາມຂັດແຍ້ງທີ່ເກີດຂຶ້ນກັບຕະຫຼາດອະສັງຫາລິມະຊັບ ໂດຍຫຼາຍຝ່າຍໃນການາດາພ້ອມໃຈກັນກົດດັນລັດຖະບານ ໃຫ້ເລັ່ງຊອກຫາວິທີຄວບຄຸມລາຄາອະສັງຫາລິມະສັບ ເນື່ອງຈາກລາຄາເຮືອນໄດ້ເພີ່ມສູງຂຶ້ນຫຼາຍກວ່າ 20% ນັບຕັ້ງແຕ່ປີ 2021 ແລະ ອັດຕາຄ່າເຊົ່າສືບຕໍ່ແພງຂຶ້ນຢ່າງຕໍ່ເນື່ອງເຊັ່ນດຽວກັນ.

ຂະນະທີ່ລັດຖະບານທ້ອງຖິ່ນໃນຫຼາຍເມືອງໃຫຍ່ເຊັ່ນ ໂຕຣອນໂຕ (Toronto) ແລະ ແວນຄູເວີ (Vancouver) ປະຕິບັດມາດຕະການເກັບພາສີເພີ່ມສຳລັບຄົນຕ່າງປະເທດທີ່ຊື້ເຮືອນ ແລະ ຜູ້ທີ່ຊື້ເຮືອນໄວ້ເພື່ອເກັງກຳໄລ.

ໃນປັດຈຸບັນ, ອັດຕາສ່ວນຄົນຕ່າງປະເທດເປັນເຈົ້າຂອງເຮືອນໃນການາດາມີບໍ່ເຖິງ 5%.

**ແຫຼ່ງຂ່າວຈາກເວັບໄຊ: ctvnews.ca**

# ມຽນມາ ບັງຄັບໃຊ້ກົດໝາຍເກນທະຫານ ຄັ້ງທຳອິດໃນຮອບ 14 ປີ



*ລັດຖະບານມຽນມາ ປະກາດໃຫ້ພົນລະເມືອງຊາຍ ແລະ ຍິງ ເຂົ້າຮັບການເກນທະຫານເປັນເວລາຢ່າງໜ້ອຍສອງປີ ໂດຍການບັງຄັບໃຊ້ກົດໝາຍດັ່ງກ່າວ ແມ່ນຄັ້ງທຳອິດນັບຕັ້ງແຕ່ອອກກົດໝາຍເມື່ອ 14 ປີຜ່ານມາ.*

ສຳນັກຂ່າວ BBC ລາຍງານຈາກນະຄອນຢາງກຸ້ງ, ປະເທດມຽນມາ ເມື່ອວັນທີ 11 ກຸມພາ 2024 ວ່າ: ກະຊວງຂ່າວສານມຽນມາ ໄດ້ອອກຖະແຫຼງການກ່ຽວກັບການບັງຄັບໃຊ້ກົດໝາຍການເກນທະຫານເປັນເວລາຢ່າງໜ້ອຍສອງປີ ສຳລັບຜູ້ຊາຍສັນຊາດມຽນມາ ອາຍຸລະຫວ່າງ 18-35 ປີ ແລະ ແມ່ຍິງສັນຊາດມຽນມາ ອາຍຸລະຫວ່າງ 18-27 ປີ ເລີ່ມມີຜົນຕັ້ງແຕ່ວັນທີ 10 ກຸມພາເປັນຕົ້ນໄປ.

ລັດຖະບານຊຸດກ່ອນໜ້ານີ້ ໄດ້ອອກກົດໝາຍດັ່ງກ່າວເມື່ອປີ 2010, ແຕ່ຍັງບໍ່ເຄີຍມີການບັງຄັບໃຊ້ຢ່າງເປັນທາງການ; ຂະນະທີ່ກະຊວງປ້ອງກັນປະເທດມຽນມາ ອອກຖະແຫຼງການເພີ່ມຕື່ມວ່າ: ຂັ້ນຕອນ, ຄຳແນະນຳ ແລະ ເງື່ອນໄຂທັງໝົດທີ່ກ່ຽວຂ້ອງ ຈະປະກາດຢ່າງເປັນທາງການອີກຄັ້ງ.

# ຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດປາກິດສະຖານ

*ຜົນການເລືອກຕັ້ງຊີ້ໃຫ້ເຫັນວ່າ ການເມືອງຂອງປາກິດສະຖານຈະສືບຕໍ່ປະເຊີນກັບສູນຍາກາດ ເພາະຍັງບໍ່ມີພັກໃດສາມາດຄອງສຽງສ່ວນຫຼາຍໄດ້ຢ່າງເດັດຂາດ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງອິດສະລາມາບັດ, ປະເທດປາກິດສະຖານ ເມື່ອວັນທີ 11 ກຸມພາ 2024 ວ່າ: ຄະນະກຳມະການເລືອກຕັ້ງຂອງປາກິດສະຖານ ປະກາດຜົນຢ່າງເປັນທາງການຂອງການເລືອກຕັ້ງທົ່ວໄປ ທີ່ການລົງຄະແນນສຽງໄດ້ຈັດຂຶ້ນເມື່ອວັນທີ 8 ກຸມພາຜ່ານມາ ປາກົດວ່າ ຜູ້ສະໝັກຮັບເລືອກຕັ້ງເອກະລາດທີ່ມີການເຊື່ອມໂຍງກັບພັກປາກິດສະຖານ ເຕຣີກ-ອີ-ອິນຊາບ ຫຼື PTI (Pakistan Tehreek-e-Insaf) ຂອງອະດີດນາຍົກລັດຖະມົນຕີ ທ່ານ ອິມຣານ ຄານ (Imran Khan) ທີ່ຖືກຫ້າມຈາກການເລືອກຕັ້ງຄັ້ງນີ້ໄດ້ຮັບການເລືອກຕັ້ງຫຼາຍທີ່ສຸດ 101 ທີ່ນັ່ງ; ພັກສັນນິບາດມຸດສະລິມປາກິດສະຖານ-ນາວາດ ຫຼື PML-N (Pakistan Muslim League-Nawaz) ຂອງອະດີດນາຍົກລັດຖະມົນຕີ ທ່ານ ນາວາດ ຊາຣິບ (Nawaz Sharif) ໄດ້ 75 ທີ່ນັ່ງ; ໃນຂະນະທີ່ພັກປະຊາຊົນປາກິດສະຖານ ຫຼື PPP (Pakistan People's Party) ຂອງທ່ານ ບິລາວັນ ບຸດໂຕ (Bilawal Bhutto) ລູກຊາຍຂອງອະດີດນາຍົກລັດຖະມົນຕີ ທ່ານ ນາງ ເບນາຊີ ບຸດໂຕ (Benazir Bhutto) ໄດ້ 54 ທີ່ນັ່ງ; ສ່ວນທີ່ຍັງເຫຼືອເປັນຂອງບັນດາພັກການເມືອງຂະໜາດກາງ, ຂະໜາດນ້ອຍ ແລະ ຜູ້ສະໝັກຮັບເລືອກຕັ້ງເອກະລາດຄົນອື່ນໆ.

ສະພາແຫ່ງຊາດ (ສະພາຕໍ່າ) ປາກິດສະຖານ ສະຫງວນ 60 ທີ່ນັ່ງສຳລັບແມ່ຍິງ ແລະ 10 ທີ່ນັ່ງສຳລັບຊົນເຜົ່າສ່ວນໜ້ອຍທີ່ບໍ່ແມ່ນຊາວມຸດສະລິມ ໂດຍຜ່ານການເປັນຕົວແທນສັດສ່ວນ (Proportional representation).

ການທີ່ບໍ່ມີພັກການເມືອງໃດໜຶ່ງສາມາດຍາດໄດ້ສຽງສ່ວນຫຼາຍພັກດຽວ ຄືຢ່າງໜ້ອຍ 169 ໃນຈຳນວນ 336 ທີ່ນັ່ງ, ນັ້ນໝາຍຄວາມວ່າການຈັດຕັ້ງລັດຖະບານຊຸດໃໝ່ຕ້ອງເປັນລັດຖະບານປະສົມ ແລະໃນປັດຈຸບັນຍັງບໍ່ມີຄວາມຈະແຈ້ງວ່າໃຜຈະມີໂອກາດໄດ້ດຳລົງຕຳແໜ່ງນາຍົກລັດຖະມົນຕີຄົນໃໝ່.



# ສານຂອງເອກວາດໍ ກຳນົດໃຫ້ການຸນຍະຄາດບໍ່ຜິດກົດໝາຍ

*ສານຂອງເອກວາດໍ ຕັດສິນວ່າ ການຸນຍະຄາດ (euthanasia - ການຊ່ວຍເຮັດໃຫ້ຄົນເຈັບທີ່ມີຄວາມເຈັບປວດຫຼາຍ ແລະ ປິ່ນປົວບໍ່ໄດ້ ຕາຍຢ່າງສະຫງົບ, ການຕາຍຢ່າງບໍ່ທໍລະມານ) ເປັນຂັ້ນຕອນຖືກຕ້ອງຕາມກົດໝາຍ, ເຊິ່ງອະນຸຍາດໃຫ້ດຳເນີນການດັ່ງກ່າວ ເພື່ອຕອບສະໜອງຕໍ່ການຮ້ອງຟ້ອງຈາກຄົນເຈັບທີ່ຢູ່ໃນໄລຍະສຸດທ້າຍ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງກີໂຕ, ປະເທດເອກວາດໍ ເມື່ອວັນທີ 08 ກຸມພາ 2024 ວ່າ: ຜູ້ພິພາກສາຂອງສານລັດຖະທຳມະນູນ 7 ຈາກທັງໝົດ 9 ທ່ານ ໄດ້ລົງມະຕິເຫັນດີກຳນົດໃຫ້ພະນັກງານແພດໝໍ ສາມາດເຮັດການຸນຍະຄາດກັບຄົນເຈັບທີ່ບໍ່ສາມາດປິ່ນປົວໄດ້ ໂດຍຖືວ່າບໍ່ມີຄວາມຜິດ ແລະ ຖືກຈຳຄຸກ.

ຄຳຕັດສິນດັ່ງກ່າວມີຂຶ້ນຫຼັງຈາກນາງ ເປົາລາ ໂຣນດັນ (Paola Roldán) ຄົນເຈັບທີ່ເປັນພະຍາດກ້າມຊີ້ນອ່ອນເພຍ (amyotrophic lateral sclerosis - ALS) ຍື່ນຄຳຮ້ອງໃນເດືອນສິງຫາ 2023 ເຊິ່ງນາງໄດ້ໂຕ້ຖຽງມາດຕາໜຶ່ງໃນປະມວນກົດໝາຍອາຍາຂອງເອກວາດໍ ທີ່ລະບຸວ່າ ການຸນຍະຄາດ ຖືວ່າເປັນການຄາດຕະກຳ ແລະ ມີໂທດຈຳຄຸກແຕ່ 10-13 ປີ.

ທັງນີ້, ສານລັດຖະທຳມະນູນ ໄດ້ມອບໝາຍໃຫ້ກະຊວງສາທາລະນະສຸກ ຮ່າງລະບຽບການສຳລັບຂັ້ນຕອນການຸນຍະຄາດ ພາຍໃນ 2 ເດືອນ, ສ່ວນສຳນັກງານສອບສວນຄຳຮ້ອງຟ້ອງ (Ombudsman's office) ຕ້ອງຮ່າງກົດໝາຍວ່າດ້ວຍການການຸນຍະຄາດ ພາຍໃນ 6 ເດືອນ ເພື່ອໃຫ້ສະພາແຫ່ງຊາດຮັບຮອງເອົາກົດໝາຍດັ່ງກ່າວ ພາຍໃນ 1 ປີ.



## ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ມາດຕະການຫຼຸດຜ່ອນການບໍລິໂພກເຫຼົ້າ ແລະ ແກ້ໄຂມົນລະພິດ

ພົບກັນປະຈຳສະບັບນີ້ ມີສອງເລື່ອງສຳຄັນມາສະເໜີ ເພື່ອຄວນເບິ່ງໄວ້ເປັນບົດຮຽນ ນັ້ນກໍຄືມາດຕະການຈຳກັດການດື່ມສິ່ງມຶນເມົາຢູ່ ກຳປູເຈຍ ແລະ ການແກ້ໄຂບັນຫາມົນລະພິດທາງອາກາດຢູ່ ສ.ເກົາຫຼີ

ກຳປູເຈຍ ໜັງສືພິມ Vientiane Times ສະບັບ ວັນທີ 19 ກັນຍາ 2022 ໄດ້ໃຫ້ຮູ້ວ່າ ໃນຊຸມປີຫຼັງໆມານີ້ ສັງຄົມ ກຳປູເຈຍ ໄດ້ຮຽກຮ້ອງໃຫ້ທາງການເອົາມາດຕະການທີ່ເຄັ່ງຄັດຮັດກຸມເພື່ອຈຳກັດການບໍລິໂພກເຄື່ອງດື່ມປະເພດມຶນເມົາ ທີ່ພວມລະບາດໜັກ ແລະ ໄດ້ນຳຜົນຮ້າຍມາສູ່ສັງຄົມກຳປຸເຈຍ. ສາເຫດຕົ້ນຕໍທີ່ກໍ່ໃຫ້ມີການລະບາດຂອງນ້ຳເມົານັ້ນ ມາຈາກອິດທິພົນຂອງການໂຄສະນາທີ່ມີຫຼາຍຮູບຫຼາຍສີຜ່ານສື່ສັງຄົມທັນສະໄໝລ້ຳຍຸກ. ທີ່ໜ້າເປັນຫ່ວງທີ່ສຸດກໍຄືທາງການ ແລະ ພາກສ່ວນກ່ຽວຂ້ອງອື່ນໆຍັງປ່ອຍປະລະເລີຍໃຫ້ເດັກນ້ອຍສາມາດຊື້ເຄື່ອງດື່ມ ທີ່ມີທາດເຫຼົ້າມາດື່ມເອງໄດ້. ທ່ານ ມຽດນີ (Measny) ນັກຄົ້ນຄ້ວາດ້ານການພັດທະນາສັງຄົມທີ່ມີຊື່ສຽງຜູ້ໜຶ່ງໄດ້ອອກມາມີຄວາມເຫັນກ່ຽວກັບບັນຫານີ້ວ່າ: ຖ້າປ່ອຍໃຫ້ເດັກດື່ມເຫຼົ້າໃນວັນນີ້, ໃນອະນາຄົດ ບ້ານເມືອງກໍຈະເຕັມໄປດ້ວຍຜູ້ໃຫຍ່ຂີ້ເຫຼົ້າ. ທ່ານ ມຽດນີ ໄດ້ເວົ້າຕື່ມວ່າ ວິທີດຽວທີ່ຈະຊ່ວຍຫຼຸດຜ່ອນການບໍລິໂພກເຫຼົ້າໃນສັງຄົມ ກຳປູເຈຍ ລົງໄດ້ນັ້ນ ກໍຄືຕ້ອງມີມາດຕະການຄວບຄຸມການໂຄສະນາຂາຍເຄື່ອງດື່ມປະເພດນີ້ ໂດຍໃຫ້ເອົາໃຈໃສ່ເປັນພິເສດກ່ຽວກັບເດັກນ້ອຍດື່ມເຫຼົ້າ. ມາດຕະການດັ່ງກ່າວຕ້ອງໄດ້ກຳນົດຫ້າມໂຄສະນາໃນທຸກຮູບແບບ ຫຼື ຫ້າມສະເພາະການໂຄສະນາທີ່ມີຜົນກະທົບແຮງທີ່ສຸດ. ຕໍ່ຄຳເຫັນຂອງທ່ານ ມຽດນີ ນັ້ນ, ພະນັກງານລັດທີ່ກ່ຽວຂ້ອງທ່ານໜຶ່ງໄດ້ສະທ້ອນທັດສະນະອອກມາວ່າ: ບໍ່ສາມາດສັ່ງຫ້າມການໂຄສະນາທັງໝົດໄດ້, ຈະເຮັດໄດ້ສະເພາະການຄວບຄຸມເວລາສຳລັບການໂຄສະນາທາງໂທລະພາບເທົ່ານັ້ນ. ໃນໄລຍະຜ່ານມາ ທາງການ ກຳປູເຈຍ ໄດ້ມີຄວາມພະຍາຍາມຈຳກັດການດື່ມສິ່ງມຶນເມົາ ໂດຍການສັ່ງຫ້າມ ໂຄສະນາເຄື່ອງດື່ມທີ່ມີທາດເຫຼົ້າມາແລ້ວຫຼາຍຄັ້ງ ແຕ່ກໍຍັງແກ້ບໍ່ຕົກ ຍ້ອນວ່າຍັງມີການອະນຸຍາດໃຫ້ຕິດຕັ້ງປ້າຍໂຄສະນາເຄື່ອງດື່ມທີ່ວ່ານີ້ຕາມແລວເສັ້ນທາງສາຍສຳຄັນຕົວເມືອງຕ່າງໆ

ສ.ເກົາຫຼີ ມີຂ່າວອອກມາຈາກສ.ເກົາຫຼີ ໃນທ້າຍໄຕມາດທີ 1 ຂອງປີ 2019 ວ່າ ລັດຖະບານ ສ.ເກົາຫຼີ ເຊິ່ງເວລານັ້ນຍັງຢູ່ພາຍໃຕ້ການນຳຂອງປະທານາທິບໍດີ ມູນແຈອິນ ໄດ້ຮັບຮອງເອົາກົດໝາຍວ່າດ້ວຍການແກ້ໄຂມົນລະພິດທາງອາກາດ ທີ່ມີລັກສະນະຄົບວົງຈອນ. ຄືກ່ອນອື່ນ ກົດໝາຍໄດ້ກຳນົດໃຫ້ບັນຫາມົນລະພິດທາງອາກາດເປັນໄພພິບັດລະດັບຊາດ. ການກຳນົດແບບນີ້ ຈະສ້າງເງື່ອນໄຂສະດວກໃຫ້ລັດຖະບານສາມາດບິແບ່ງເອົາທຶນສຳຮອງບາງສ່ວນໄປນຳໃຊ້ເພື່ອຮັບມືກັບຄວາມເສຍຫາຍ ຫຼື ເຫດການສຸກເສີນອື່ນໆ ທີ່ເກີດມາຈາກໄພພິບັດທາງອາກາດ. ນອກຈາກນີ້, ກົດໝາຍຍັງໄດ້ກຳນົດໃຫ້ໂຮງຮຽນທຸກໆແຫ່ງມີເຄື່ອງມືຟອກອາກາດແຮໄວ້ ແລະ ກຳນົດໃຫ້ມີການຍົກເລີກຂໍ້ຈຳກັດການຈຳໜ່າຍແກັສ LGP ທີ່ປ່ອຍອາຍພິດໜ້ອຍກວ່ານ້ຳມັນແອັດຊັງ ແລະ ກາຊວນ. ກ່ອນໜ້າມີກົດໝາຍສະບັບນີ້, ທາງການສ.ເກົາຫຼີກໍເຄີຍໄດ້ປະຕິບັດຫຼາຍມາດຕະການເພື່ອແກ້ໄຂບັນຫາມົນລະພິດທາງອາກາດ ລວມທັງການຈຳກັດການເຮັດວຽກຂອງໂຮງໄຟຟ້າທີ່ໃຊ້ພະລັງງານຖ່ານຫີນ. ສ.ເກົາຫຼີ, ປະເທດທີ່ມີລະດັບເສດຖະກິດໃຫຍ່ເປັນອັນດັບທີ 4 ຂອງທະວີບອາຊີ ໄດ້ປະເຊີນກັບບັນຫາສິ່ງແວດລ້ອມເສື່ອມໂຊມໂດຍສະເພາະແມ່ນເລື່ອງອາກາດເປັນພິດ ທີ່ເກີດມາຈາກຫຼາຍສາເຫດເຊັ່ນຈາກບັນດາໂຮງງານທີ່ໃຊ້ພະລັງງານຖ່ານຫີນ ແລະ ຈາກຄວັນລົດທີ່ມີລົ້ນຖະໜົນຢູ່ພາຍໃນປະເທດ.

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ທະນາຄານພັດທະນາລາວ
LDB Bank




# ລູກສາວຄ່ຳຮູ້

*# ບ່າວກະບື*

ລູກສາວປ້າແຈ່ມເສັງເຂົ້າມະຫາວິທະຍາໄລໄດ້ ເລີຍຕ້ອງເຂົ້າໄປຢູ່ຫໍພັກນັກສຶກສາຍິງ. ປ້າແຈ່ມຮູ້ສຶກກະວົນກະວາຍ ແລະ ເຕືອນລູກສາວວ່າ ລາວຊິກັ້ນໃຈຕາຍໂລດ ຫາກຮູ້ວ່າມີແຂກຜູ້ຊາຍເຂົ້າໄປຫ້ອງນອນລູກສາວ.

ຄືນວັນສຸກໜຶ່ງ, ປ້າແຈ່ມໂທໜ້ຳໆຫາລູກສາວຢູ່ຫໍພັກ ແຕ່ລູກສາວບໍ່ຢູ່ ປ້າແຈ່ມອອກຮ້ອນອອກຮົນ ສຸດທ້າຍ, ເວລາໜຶ່ງໂມງເຊົ້າ, ປ້າຈຶ່ງໂທຫານາງໄດ້ ປ້າຖາມຮ້າຍໆອອກມາວ່າ "ແມ່ນລູກໄປໃສມາ?"

"ເອີ... ແມ່... ລູກໄປຫ້ອງນອນຜູ້ບ່າວ ເພື່ອໃຫ້ແມ່ຂອງລາວກັ້ນໃຈຕາຍ, ແທນທີ່ຈະເປັນແມ່!".

# OBEDIENT DAUGHTER

*# BAOKBU*

Aunt Chaem's daughter took admission in the university and was to live in a co-ed dormitory. Aunt Chaem was very worried and warned her daughter that she would die if she ever found out that her daughter had male visitors in her room. One Friday night, Aunt Chaem kept on calling her daughter's dormitory. She was not there. Aunt Chaem got worried. Finally at 1.00 am she got hole of her daughter and asked amgrily.

"where were you?"

"Mom, I was visiting a boy's room, so that his mother dies, instead of you.

## ຕາມພາສາ ກາຕູນ




• ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສົມພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພານວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທານ ນາງ ໄຊໂສພາພອນ ມິ່ງມຽງຄູນ
ທ່ານ ກົງທະນູຄຳ ພົມເສລີ
ທ່ານ ນາງ ສຸພາວັນ ທອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ